ພະຍາກອນ ວຽງຈັນ
24–31°C
ວັນອັງຄານ 20/10 · ເມฆบางส่วน

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນອັງຄານ 20 ຕຸລາ 2026 · ສະບັບທີ 002 | ສະຫຼຸບຂ່າວປະຈຳວັນຈັນ 19 ຕຸລາ 2026 · 20 ຂ່າວ | 16 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ຂ່າວຕ່າງປະເທດ** · 19:44 ໂມງ · ອ່ານ 79 ຄັ້ງ

ປູຕິນສະເໜີຈັດປະຊຸມ 3 ຝ່າຍ ກັບທຣຳ ແລະ ສີ ຈິ້ນຜິງ ເພື່ອຫາທາງຍຸຕິສົງຄາມຢູເຄຣນ ໂດຍບໍ່ມີເຊເລນສະກີ



ມີລາຍງານວ່າ ທ່ານ ອະລາດີເມຍ ປູຕິນ ປະທານາທິບໍດີຣັດເຊຍ ໄດ້ສະເໜີໃຫ້ຈັດການປະຊຸມສຸດຍອດ 3 ຝ່າຍ ລະຫວ່າງຕົນເອງ, ທ່ານ ໂດນັລ ທຣຳ ປະທານາທິບໍດີສະຫະລັດ ແລະ ທ່ານ ສີ ຈິ້ນຜິງ ປະທານາທິບໍດີຈີນ ເພື່ອຫາແນວທາງບັນລຸຂໍ້ຕົກລົງຍຸຕິສົງຄາມໃນຢູເຄຣນ ໂດຍບໍ່ມີຜູ້ນຳຢູເຄຣນເຂົ້າຮ່ວມ.

ໜັງສືພິມ The Wall Street Journal ລາຍງານໃນວັນທີ 19 ຕຸລາ ໂດຍອ້າງຂໍ້ມູນຈາກອະດີດເຈົ້າໜ້າທີ່ຂ່າວກອງລັບຣັດເຊຍຜູ້ໜຶ່ງ ທີ່ຮັບຊາບເລື່ອງດັ່ງກ່າວວ່າ ຂໍ້ສະເໜີນີ້ຖືກຍົກຂຶ້ນມາໃນລະຫວ່າງການ

ຕໍ່ໜ້າ 2

◆ **ຂ່າວພາຍໃນ** · 13:56 ໂມງ

ທ່ານ ນະຄະເສນ ສີຫາລາດ ສະເໜີ 4 ຈຸດສຳຄັນ ຕໍ່ຮ່າງກົດໝາຍວ່າດ້ວຍລັດຖະບານ



ທ່ານ ນະຄະເສນ ສີຫາລາດ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງ ວຽງຈັນ (ນວ) ໄດ້ປະກອບຄຳເຫັນໃສ່ຮ່າງກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ) ຕໍ່ກອງປະຊຸມສະ ໄໝສາມັນ ເທື່ອທີ 2 ຂອງ ສະພາແຫ່ງຊາດ ຊຸດທີ X ໃນວັນທີ 16 ຕຸລາຜ່ານມາ, ທີ່ ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ນາງ ສຸນ ທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ.

ທ່ານ ນະຄະເສນ ສີຫາລາດ ໄດ້ມີຄຳເຫັນແລກປ່ຽນ ໃນ 4 ຈຸດສຳຄັນຄື:

1. ສະເໜີຕໍ່ກັບບັນຫາ ການສ້າງຕັ້ງເຂດເສດຖະກິດ

ຕໍ່ໜ້າ 2

ໃນສະບັບນີ້

2 ຂ່າວຕ່າງປະເທດ
2 ຂ່າວພາຍໃນ
9 ເສດຖະກິດ-ສັງຄົມ
10 ເຫດການ
11 ທ່ອງທ່ຽວ
13 ເບິ່ງດວງ
15 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
16 ກິລາ



◆ **ເຫດການ** · 10:45 ໂມງ

ແຂວງຊຽງຂວາງ ພົບ ການລັກລອບຂຸດຄົ້ນ ແຮ່ຄຳ ຢູ່ຫ້ວຍນ້ຳພາ...

ອ່ານໜ້າ 10 ▸



◆ **ຂ່າວພາຍໃນ** · 16:25 ໂມງ

ທ່ານ ນາງ ບຸນຄຳ ວໍລະຈິດ ຜູ້ວ່າການ ທະນາຄານແຫ່ງສປ...

ອ່ານໜ້າ 2 ▸



◆ **ເບິ່ງດວງ** · 10:36 ໂມງ

ເບິ່ງດວງປະຈຳວັນທີ 19/10/2026.

ອ່ານໜ້າ 13 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ປູຕິນສະເໜີຈັດປະຊຸມ 3 ຝ່າຍ ກັບທຣຳ ແລະ ສີ ຈິນຜິງ ເພື່ອຫາ... (ຕໍ່ຈາກໜ້າ 1)

ສົນທະນາທາງໂທລະສັບລະຫວ່າງທ່ານ ປູຕິນ ແລະ ທ່ານ ທຣຳ ເມື່ອວັນທີ 9 ຕຸລາ ຜ່ານມາ. ລາຍງານຍັງລະບຸວ່າ ການສົນທະນາຄັ້ງນັ້ນມີການບັນລຸຄວາມເຂົ້າໃຈໃຫ້ຣັດເຊຍສາມາດຈຳໜ່າຍນ້ຳມັນກາຊວນສູ່ຕະຫຼາດໂລກໄດ້ອີກດ້ວຍ.

ເຖິງຢ່າງໃດກໍຕາມ ຂໍ້ສະເໜີຈັດການປະຊຸມ 3 ຝ່າຍດັ່ງກ່າວຍັງບໍ່ໄດ້ຮັບການຢືນຢັນຢ່າງເປັນທາງການ. ຫາກການປະຊຸມເກີດຂຶ້ນຈິງ ມີລາຍງານວ່າ ທ່ານ ໂອໂລດີເມຍ ເຊເລນສະກີ ປະທານາທິບໍດີຢູເຄຣນ ອາດຈະບໍ່ໄດ້ຮັບເຊີນເຂົ້າຮ່ວມ. ການປະຊຸມອາດຈັດຂຶ້ນໃນຊ່ວງການປະຊຸມສຸດຍອດຄວາມຮ່ວມມືທາງເສດຖະກິດອາຊີ-ປາຊີຟິກ (APEC) ໃນເດືອນພະຈິກ ທີ່ເມືອງເຊີນເຈິ້ນ ປະເທດຈີນ.

ລາຍງານນີ້ເກີດຂຶ້ນໃນຂະນະທີ່ຄວາມຕຶງຄຽດລະຫວ່າງຢູເຄຣນ ແລະ ສະຫະລັດ ມີທ່າອ່ຽງເພີ່ມສູງຂຶ້ນ ເຖິງ ແມ່ນວ່າ ສະຫະລັດ ເປັນໜຶ່ງໃນຜູ້ສະໜັບສະໜຸນທາງທະຫານທີ່ສຳຄັນທີ່ສຸດ ຂອງຢູເຄຣນກໍຕາມ.

ທ່າທີຫຼ້າສຸດຂອງລັດຖະບານທ່ານ ທຣຳ ທີ່ຖືກມອງວ່າ ມີແນວໂນ້ມເອື້ອອ່ຽງໄປທາງຣັດເຊຍ ໄດ້ສ້າງຄວາມກັງວົນໃຫ້ແກ່ບັນດາປະເທດພັນທະມິດໃນເອີຣົບ ພ້ອມທັງກໍ່ໃຫ້ເກີດການວິພາກວິຈານຈາກຫຼາຍຝ່າຍ ລວມທັງສະມາຊິກບາງຄົນພາຍໃນພັກຣີພັບລີກັນຂອງທ່ານ ທຣຳ ເອງ.

ໃນຊ່ວງທ້າຍອາທິດຜ່ານມາ ທ່ານ ທຣຳ ໄດ້ອອກມາປົກປ້ອງການຕັດສິນໃຈ ຂອງຕົນ ກ່ຽວກັບການຜ່ອນຜັນມາດຕະການລົງໂທດຕໍ່ການສົ່ງອອກນ້ຳມັນກາຊວນ ຂອງຣັດເຊຍເປັນການຊົ່ວຄາວ. ນອກຈາກນີ້ ໃນວັນທີ 18 ຕຸລາ ຍັງມີລາຍງານເຖິງ ຄຳສັ່ງຝ່າຍບໍລິຫານທີ່ຍົກເວັ້ນມາດຕະການລົງໂທດຕໍ່ຣັດເຊຍຊຸດໃໝ່ ອອກຈາກຮ່າງ ກົດໝາຍທີ່ສະເໜີໂດຍອະດີດວຸດທິ ສະມາຊິກ ທ່ານ ລິນດ໌ຊີ ແກຣມ.

ດ້ານທ່ານ ເຊເລນສະກີ ມີທ່າທີບໍ່ເຫັນດີກັບການຜ່ອນຜັນດັ່ງກ່າວ ໂດຍລະບຸວ່າ ທ່ານ ທຣຳ ກຳລັງເຮັດຜິດພາດທີ່ລະງັບການລົງໂທດຣັດເຊຍ ເພາະອາດຍິ່ງເຮັດໃຫ້ທ່ານ ປູຕິນ ມີຄວາມກ້າໄດ້ກ້າເສຍຫຼາຍຂຶ້ນ.

ຂະນະດຽວກັນ ທ່ານ ທຣຳ ໄດ້ກ່າວຫາທ່ານ ເຊເລນສະກີ ຜ່ານແພລດຟອມ Truth Social ວ່າ ບໍ່ຕ້ອງການຍຸຕິສົງຄາມ. ທ່ານ ທຣຳ ຍັງອະທິບາຍວ່າ ການຕັດສິນໃຈຜ່ອນຜັນມາດຕະການລົງໂທດຣັດເຊຍ ແມ່ນເພື່ອຫຼີກລ່ຽງການກະທຳທີ່ອາດຜັກດັນໃຫ້ຣັດເຊຍຖອນຕົວອອກຈາກໂຕະເຈລະຈາຢ່າງບໍ່ມີເຫດຜົນ.

ສ່ວນສະຖາບັນສຶກສາສົງຄາມ (Institute for the Study of War: ISW) ໄດ້ລະບຸໃນບົດລາຍງານວ່າ ຄຳສັ່ງຝ່າຍບໍລິຫານຂອງທ່ານ ທຣຳ ເມື່ອວັນທີ 16 ຕຸລາ ບໍ່ໄດ້ຊ່ວຍສົ່ງເສີມເປົ້າໝາຍນະໂຍບາຍຕ່າງປະເທດທີ່ທ່ານ ທຣຳ ປະກາດໄວ້ ກ່ຽວກັບການຍຸຕິສົງຄາມໃນຢູເຄຣນ. ພ້ອມກັນນັ້ນ ຍັງອາດເປີດທາງໃຫ້ຣັດເຊຍສາມາດດຳເນີນສົງຄາມຕໍ່ໄປໄດ້ຍາວນານ ໂດຍຂາດແຮງກົດດັນ ຫຼື ແຮງຈູງໃຈທີ່ພຽງພໍໃຫ້ຣັດເຊຍເຂົ້າຮ່ວມການເຈລະຈາສັນຕິພາບຢ່າງຈິງຈັງ.

ທ່ານ ນະຄະເສນ ສີຫາລາດ ສະເໜີ 4 ຈຸດສຳຄັນ ຕໍ່ຮ່າງກົດໝາຍ... (ຕໍ່ຈາກໜ້າ 1)

ພິເສດ ແລະ ເຂດເສດຖະກິດສະເພາະ ຕ້ອງໄດ້ຮັບການຕົກລົງເຫັນດີຈາກ ຄະນະປະຈຳສະພາແຫ່ງຊາດ ຫຼື ກອງປະຊຸມສະພາແຫ່ງຊາດ ກ່ອນທີ່ລັດຖະບານຈະອະນຸມັດສ້າງຕັ້ງ.

2. ສະເໜີໃຫ້ກຳນົດລະບົບການປະສານສົມທົບ ແລະ ປະສານງານ ລະຫວ່າງລັດຖະບານ ກັບສະພາ ແຫ່ງຊາດ ໃຫ້ຊັດເຈນ ໂດຍສະເພາະ ການປະສານສົມທົບໃນການຄົ້ນຄວ້າພິຈາລະນາຕົກລົງ ບັນຫາສຳຄັນ ຫຼື ບັນດາແຜນງານ, ແຜນການ, ບັນດາໂຄງການໃຫຍ່ລະດັບຊາດ ຕ້ອງໄດ້ຜ່ານການຮັບຮອງ ແລະ ເຫັນດີຈາກສະພາແຫ່ງຊາດ.

3. ຄວນເພີ່ມຂໍ້ກຳນົດກ່ຽວກັບກົນໄກ ແລະ ມາດຕະການໃນການຕິດຕາມ ກວດ ກາ ການລາຍງານຂອງລັດຖະບານ ໃນການຈັດຕັ້ງປະຕິບັດ ຫຼື ການແກ້ໄຂຄຳສະເໜີ, ຄຳຊັກຖາມ ແລະ ຄຳແນະນຳຂອງກອງປະຊຸມສະພາແຫ່ງຊາດ ແຕ່ລະຄັ້ງໃຫ້ລະອຽດຊັດເຈນຕື່ມ.

4. ສະເໜີໃຫ້ກຳນົດພັນທະ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງລັດຖະບານ ໃນການເປັນເຈົ້າການ ແກ້ໄຂຜົນຂອງການກວດສອບ ແລະ ຜົນຂອງການກວດກາເຂົ້າໃນກົດໝາຍລັດຖະບານຕື່ມ.

ຂ່າວ: ພຸວັນ

ຂ່າວພາຍໃນ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 16:25 ໂມງ · ອ່ານ 18 ຄັ້ງ

ທ່ານ ນາງ ບຸນຄຳ ວໍລະຈິດ ຜູ້ວ່າການທະນາຄານແຫ່ງສປປລາວ ສະເໜີປັບປຸງການສ້າງກົດໝາຍ ວ່າດ້ວຍການປົກປ້ອງເງິນຝາກ



ທ່ານ ນາງ ບຸນຄຳ ວໍລະຈິດ ຜູ້ວ່າການທະນາຄານແຫ່ງສປປລາວ ໄດ້ສະເໜີເຫດຜົນ, ຄວາມຈຳເປັນໃນການປັບປຸງການສ້າງກົດໝາຍ ວ່າດ້ວຍການປົກປ້ອງເງິນຝາກ ຊຶ່ງເປັນກົດໝາຍສ້າງໃໝ່ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ໃນວັນທີ 19 ຕຸລານີ້, ທີ່ສະພາແຫ່ງຊາດ ພາຍໃຕ້ການເປັນປະທານຂອງທ່ານ ກອງແກ້ວ ໄຊສົງຄາມ ຮອງປະທານສະພາແຫ່ງຊາດ.

ທ່ານ ນາງ ບຸນຄຳ ວໍລະຈິດ ໄດ້ລາຍງານວ່າ: ວຽກງານປົກປ້ອງເງິນຝາກ ເປັນວຽກງານໜຶ່ງທີ່ມີຄວາມສຳຄັນຕໍ່ລະບົບສະຖາບັນການເງິນ ແລະ ການຮັກສາສະຖຽນລະພາບທາງດ້ານການເງິນຂອງຫຼາຍປະເທດໃນໂລກ ລວມທັງ ສປປ ລາວ ຊຶ່ງເປັນສ່ວນໜຶ່ງໃນການສ້າງຄວາມເຂັ້ມແຂງໃຫ້ຕາໜ່າງຄວາມປອດໄພທາງດ້ານການເງິນ. ປັດຈຸບັນສຳນັກງານປົກປ້ອງເງິນຝາກ (ສປງ) ໄດ້ນຳໃຊ້ເຄື່ອງມືໃນການຄຸ້ມຄອງຕາມລະບຽບຫຼັກການ CAMELS ເປັນບ່ອນອີງໃນການພັດທະນາເຄື່ອງມືຄຸ້ມຄອງຕາມຄວາມສ່ຽງຂອງສະມາຊິກ ທີ່ເປັນທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບຝາກໃດໜຶ່ງ ຖ້າຫາກມີຄວາມສ່ຽງຕ່ຳ ກໍເກັບເບ້ຍປະກັນເງິນຝາກໃນອັດຕາທີ່ຕ່ຳ ແລະ ຖ້າມີຄວາມສ່ຽງສູງ ກໍເກັບເບ້ຍປະກັນເງິນຝາກໃນອັດຕາທີ່ສູງ ແຕ່ບໍ່ເກີນເພດານໜຶ່ງສ່ວນຮ້ອຍ (1%) ທີ່ກຳນົດໄວ້ໃນມາດຕາ 11 ຂອງຮ່າງກົດໝາຍ, ຂໍ້ມູນອ້າງອີງຈາກດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ກ່ຽວກັບຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນ (GDP per Capita) (ປະມານ 2,185 ໂດລາຕໍ່ຄົນ), ກົດໝາຍສະບັບນີ້ ອີງໃສ່ກົດໝາຍວ່າດ້ວຍການຄຸ້ມຄອງປົກປ້ອງເງິນຝາກຂອງປະເທດ ສສ ຫວຽດນາມ ແລະ ສປຈີນ ແມ່ນບໍ່ໄດ້ກຳນົດເພດານການເກັບເບ້ຍປະກັນເງິນຝາກ ຊຶ່ງສາມາດເກັບເບ້ຍປະກັນເງິນຝາກຕາມຄວາມສ່ຽງຂອງສະມາຊິກ ແຕ່ລະໄລຍະອາດຈະສູງກວ່າ 1%. ປັດຈຸບັນ, ສປງ ເກັບເບ້ຍປະກັນເງິນຝາກໃນອັດຕາ 0.1% ຕາມລະບຽບການ ຊຶ່ງບໍ່ແທດ ເໝາະກັບຄວາມສ່ຽງທີ່ເກີດຂຶ້ນຕົວຈິງຂອງສະມາຊິກ ທີ່ມີຄວາມສ່ຽງສູງອາດກ້າວໄປເຖິງສະພາວະລົ້ມລະລາຍ. ສະນັ້ນ, ເພື່ອເປັນການສ້າງຄວາມເຂັ້ມແຂງ ແມ່ນເປັນມາດຕະການໜຶ່ງ ໃນການຄຸ້ມຄອງຄວາມສ່ຽງເພື່ອເຮັດໃຫ້ສະມາຊິກປັບປຸງການບໍລິຫານພາຍໃນໃຫ້ມີຄວາມໝັ້ນຄົງ ບໍ່ສົ່ງຜົນກະທົບຕໍ່ຜູ້ຝາກເງິນ ແລະ ເສດຖະກິດ-ສັງຄົມ; ພ້ອມທັງພັດທະນາເຄື່ອງມືການຈ່າຍເງິນປົກປ້ອງ ຈາກການຈ່າຍເງິນປົກປ້ອງ (Paybox) ທີ່ເຮັດໜ້າທີ່ພຽງແຕ່ຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນມາເປັນການຈ່າຍເງິນປົກປ້ອງ ແລະ ເຮັດໜ້າທີ່ໃນການແກ້ໄຂບັນຫາສະມາຊິກ (Paybox Plus) ໂດຍການນຳໃຊ້ຄັ້ງປົກປ້ອງເງິນຝາກ ເຂົ້າໃນການແກ້ໄຂບັນຫາສະມາຊິກ ຕາມການມອບໝາຍຂອງ ທຫລ ແລະ ອີງໃສ່ຫຼັກການຂອງສາກົນກໍຄື: ສະມາຄົມປະກັນໄພເງິນຝາກສາກົນໄດ້ກຳນົດໃນຫຼັກການທີ 16 ການນຳໃຊ້ຄັ້ງປົກປ້ອງເງິນຝາກເຂົ້າໃນການແກ້ໄຂບັນຫາ. ສະນັ້ນ, ການປົກປ້ອງພະນັກງານໃນຂະນະເຄື່ອນໄຫວວຽກງານປົກປ້ອງເງິນຝາກ ຈະຊ່ວຍສ້າງຄວາມໝັ້ນໃຈໃນການປະຕິບັດໜ້າທີ່ຂອງຕົນ ບົນພື້ນຖານຮັບປະກັນຄວາມສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງ ໂດຍປາສະຈາກຄວາມກັງວົນຕໍ່ກັບຄ່າໃຊ້ຈ່າຍໃນການດຳເນີນຄະດີ ຫຼື ການຖືກຮ້ອງຟ້ອງຈາກບຸກຄົນ ຫຼື ນິຕິບຸກຄົນອື່ນ; ການປົກປ້ອງທາງດ້ານກົດໝາຍນີ້ ບໍ່ໝາຍວ່າ ພະ ນັກງານທີ່ເຮັດວຽກງານປົກປ້ອງເງິນຝາກ ຈະບໍ່ສາມາດຖືກຮ້ອງຟ້ອງ ຫຼື ຖືກດຳເນີນຄະດີ, ຫາກພະນັກງານດັ່ງກ່າວປະຕິບັດບໍ່ສອດຄ່ອງຕາມທີ່ກົດໝາຍ ແລະ ລະບຽບການກຳນົດ ກໍຕ້ອງຖືກດຳເນີນຄະດີຕາມກົດໝາຍທີ່ກ່ຽວຂ້ອງ. ປັດຈຸບັນ, ຂະແໜງການການເງິນ ກໍມີການກຳນົດການປົກປ້ອງພະນັກງານ ເປັນຕົ້ນໃນກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ການກໍ່ການຮ້າຍ (ສະບັບປັບປຸງ ໃນມາດຕາ 6 ການປົກປ້ອງ) ແລະ ກົດໝາຍ ວ່າດ້ວຍຫຼັກຊັບ (ສະບັບປັບປຸງໃນມາດຕາ 6 ການປົກປ້ອງ); ຄວາມປອດໄພທາງດ້ານການເງິນຢູ່ ສປປ ລາວ ເພື່ອເຮັດໃຫ້ວຽກງານປົກປ້ອງເງິນຝາກປະຕິບັດໄດ້ຢ່າງຄ່ອງຕົວ ແລະ ມີປະສິດທິພາບ ແລະ ປະສິດທິຜົນ. ຮ່າງກົດໝາຍສະບັບນີ້ ປະກອບດ້ວຍ VIII ພາກ, 8 ໝວດ ແລະ 66 ມາດຕາ.

ພາຍຫຼັງກົດໝາຍສະບັບນີ້ຖືກຮັບຮອງ ແລະ ປະກາດໃຊ້ ຈະມີຜົນດັ່ງນີ້: ວຽກງານປົກປ້ອງເງິນຝາກ ເປັນວຽກງານໜຶ່ງໃນການປະກອບສ່ວນຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ແຜນພັດທະນາລະບົບສະຖາບັນການເງິນ-ເງິນຕາໄລຍະ 5 ປີ (2026-2030) ໃນການສ້າງຄວາມເຊື່ອໝັ້ນໃຫ້ຜູ້ຝາກເງິນ ເພື່ອລະດົມເງິນຝາກເຂົ້າໃນລະບົບສະຖາບັນການເງິນໃຫ້ຫຼາຍຍິ່ງຂຶ້ນ ແນໃສ່ບັນລຸຄາດໝາຍຍອດເງິນຝາກຕໍ່ GDP ຫຼາຍກວ່າ 90% ທັງເປັນການເສີມສ້າງຄວາມເຂັ້ມແຂງຂອງລະບົບຕາໜ່າງຄວາມປອດໄພທາງດ້ານການເງິນ ແລະ ຮັກສາສະຖຽນລະພາບທາງດ້ານການເງິນຂອງ ສປປ ລາວ ແລະ ການເຂົ້າເຖິງການບໍລິການທາງການເງິນຂອງ ສປປ ລາວ; ການສ້າງກົດໝາຍ ວ່າດ້ວຍການປົກປ້ອງເງິນຝາກສະບັບນີ້ ເພື່ອເປັນບ່ອນອີງໃນການຜັນຂະຫຍາຍນິຕິກຳລຸ່ມກົດໝາຍ ເພື່ອຈັດຕັ້ງປະຕິບັດ ວຽກງານປົກປ້ອງເງິນຝາກ ເຮັດໃຫ້ການ

ຕໍ່ໜ້າ 4

ທ່ານ ນາງ ບຸນຄຳ ວໍລະຈິດ ຜູ້ວ່າການທະນາຄານແຫ່ງສປປລາວ... (ต่อจากหน้า 3)

ເຄື່ອນໄຫວວຽກງານດັ່ງກ່າວມີ ປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ ເພື່ອປັບປຸງ ແລະ ພັດທະນາການຄຸ້ມຄອງ ຂອງ ສປປ ກໍຄື ທຫລ ມີຄວາມເຂັ້ມແຂງ ເປັນຕົ້ນ ສາມາດນຳໃຊ້ເຄື່ອງມືໃນການ ຄຸ້ມຄອງຕາມລະບຽບການ ຫຼັກການ CAMELS ເປັນບ່ອນອີງໃນການ ພັດທະນາເຄື່ອງມື ຄຸ້ມຄອງຕາມຄວາມສ່ຽງ ຂອງສະມາຊິກທີ່ເປັນທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບຝາກໃດໜຶ່ງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ໃນແຕ່ລະໄລຍະ; ສາມາດກຳນົດອັດຕາ ເບ້ຍປະກັນເງິນຝາກໄດ້ຢືດຢຸ່ນຂຶ້ນ ໂດຍ ສະເພາະການເກັບເບ້ຍປະກັນເງິນຝາກ ຕາມປະເພດຄວາມສ່ຽງຂອງສະມາຊິກ ໝາຍວ່າສະມາຊິກໃດທີ່ມີຄວາມສ່ຽງຕ່ຳ ກໍເກັບເບ້ຍປະກັນເງິນຝາກໃນອັດຕາທີ່ຕ່ຳ ແລະ ຖ້າມີຄວາມສ່ຽງສູງ ກໍເກັບເບ້ຍ ປະກັນເງິນຝາກໃນອັດຕາທີ່ສູງ ແຕ່ບໍ່ເກີນ ເພດານໜຶ່ງສ່ວນຮ້ອຍ (1%) ທີ່ກຳນົດ ໄວ້ໃນມາດຕາ 11 ຂອງຮ່າງກົດໝາຍ ສະບັບນີ້ ພ້ອມທັງເປັນການຊ່ວຍໃຫ້ ເຂົາເຈົ້າສາມາດປັບປຸງ ການບໍລິຫານ ພາຍໃນຕົນເອງໃຫ້ດີຂຶ້ນ ພ້ອມທັງເປັນ ການສ້າງຄວາມເຂັ້ມແຂງໃຫ້ສະມາຊິກເອງ ແລະ ບໍ່ເປັນການ ເອື້ອຍອີງງົບປະມານ ຈາກພາກລັດ ທີ່ຕ້ອງຮອງຮັບໃຫ້ການທົດ ແທນເງິນຝາກທີ່ບໍ່ພຽງພໍ ແລະ ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ ຝາກເງິນ ເພື່ອຮັບປະກັນໃຫ້ວົງເງິນ ປົກປ້ອງສູງສຸດບໍ່ໃຫ້ຫຼຸດລາມເທົ່າຂອງ ລວມ ຍອດຜະລິດຕະພັນພາຍໃນສະເລ່ຍ ຕໍ່ຫົວຄົນ ແລະ ສາມາດປົກປ້ອງຜູ້ຝາກເງິນ ບໍ່ຫຼຸດ 90% ຂອງຜູ້ຝາກເງິນທີ່ໄດ້ຮັບການ ປົກປ້ອງທັງໝົດ; ເພີ່ມຄວາມເຊື່ອໝັ້ນໃຫ້ ຜູ້ຝາກເງິນ ແລະ ສັງຄົມຕໍ່ລະບົບສະຖາບັນ ການເງິນ ເປັນຕົ້ນ ໃນກໍລະນີທີ່ສະຖາບັນ ການເງິນໃດໜຶ່ງເກີດທາງສ່ຽງທີ່ສ້າງຜົນ ກະທົບຕໍ່ຄວາມໝັ້ນຄົງຂອງຕົນຈະຊ່ວຍ ຫຼຸດຜ່ອນບັນຫາການແຫ່ຖອນເງິນ (Bank run) ອອກຈາກສະຖາບັນການ ເງິນ. ສະນັ້ນ, ການປັບວົງເງິນໃຫ້ສູງຂຶ້ນຈະ ຊ່ວຍຫຼຸດຜ່ອນຄວາມກັງວົນຂອງຜູ້ຝາກເງິນ ໃນລະດັບໜຶ່ງ ຕາມຄວາມຮຽກຮ້ອງ ຕ້ອງການຂອງຜູ້ຝາກເງິນທີ່ຕ້ອງ ການໃຫ້ ເພີ່ມຂຶ້ນ ຖ້າທຽບໃສ່ຍອດເຫຼືອເງິນຝາກ ຂອງຜູ້ຝາກເງິນທີ່ມີຢູ່ໃນຕົວຈິງ; ສາມາດ ຈັດຕັ້ງປະຕິບັດໃນການເຂົ້າຮ່ວມ ແລະ ນຳ ໃຊ້ຄັງປົກປ້ອງເງິນຝາກ ເພື່ອແກ້ໄຂບັນຫາ ສະຖາບັນການເງິນ ຫຼື ສະມາຊິກແຕ່ຫົວທີ ເປັນຕົ້ນ ການປ່ອຍກູ້ໃຫ້ສະມາຊິກທີ່ເກີດ ບັນຫາ, ຄວບຮ່ວມກິດຈະການ... ແລະ ສາມາດຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນທີ່ ໄດ້ຮັບການປົກປ້ອງ ໃນກໍລະນີສະມາຊິກ ຕົກຢູ່ໃນສະພາວະລົ້ມລາຍຢ່າງທັນ ສະພາບການ ແລະ ສອດ ຄ່ອງກັບ ຫຼັກການສາກົນເທື່ອລະກ້າວ; ຮ່າງ ກົດໝາຍສະບັບນີ້ໄດ້ກຳນົດເພີ່ມສະມາຊິກ ຂອງ ສປປ ຊຶ່ງລວມມີທະ ນາຄານ ທຸລະກິດ, ສະຖາບັນການເງິນຈຸລະພາກທີ່ ຮັບເງິນຝາກ ແລະ ສະຖາບັນການເງິນອື່ນ ທີ່ຮັບເງິນຝາກ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງ ຕາມກົດໝາຍທີ່ກ່ຽວຂ້ອງ ຈະສາມາດ ຂະຫຍາຍສະມາຊິກຂອງສຳນັກງານ ປົກປ້ອງເງິນຝາກໃຫ້ຫຼາຍຍິ່ງຂຶ້ນໃນ ຂອບເຂດທົ່ວປະເທດຕາມພາລະບົດບາດ ຂອງ ທຫລ ເພື່ອຮັບປະກັນການປົກປ້ອງ ເງິນຝາກຂອງຜູ້ຝາກເງິນໃຫ້ກວມເອົາ ອັດຕາສ່ວນເພີ່ມຂຶ້ນ ພ້ອມທັງສ້າງຄວາມ ເຊື່ອໝັ້ນໃຫ້ສັງຄົມ ໃນການນຳເງິນໄປ ຝາກໄວ້ກັບສະມາຊິກຂອງສຳນັກງານ ປົກປ້ອງເງິນຝາກນັບມື້ນັບສູງຂຶ້ນ.

ຂ່າວ-ພາບ: ບຸນອຸ້ມ

◆ ข่าวพายใน · 09:30 โมง · อ่าน 15 ครั้ง

สองนายົກລັດຖະມົນຕີ ລາວ-ສິງກະໂປ ສົນທະນາທາງໂທລະສັບ



ໃນຕອນບ່າຍຂອງວັນທີ 16 ຕຸລານີ້, ພະນະທ່ານ ສະ ເຫຼີມໄຊ ກົມມະສິດ ນາຍົກລັດຖະມົນຕີ ແຫ່ງ ສາທາລະ ນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ສົນທະນາທາງ ໂທລະສັບກັບ ພະນະທ່ານ ລໍເຣນສ ວອງ (Lawrence Wong) ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ສິງ ກະໂປ.

ໃນໂອກາດດັ່ງກ່າວ, ພະນະທ່ານ ລໍເຣນສ ວອງ ໄດ້ ສະ ແດງຄວາມຊົມເຊີຍຢ່າງຈິງໃຈ ມາຍັງ ພະນະທ່ານ ສະເຫຼີມໄຊ ກົມມະສິດ ທີ່ໄດ້ຮັບການເລືອກຕັ້ງເປັນ ນາຍົກ ລັດຖະ ມົນຕີ ແຫ່ງ ສປປ ລາວ ຄົນໃໝ່ ໃນວັນທີ 5 ຕຸລາ 2026 ທີ່ຜ່ານມາ ແລະ ໄດ້ເຊື້ອເຊີນຢ້ຽມຢາມ ສ ສິງກະໂປ ຢ່າງເປັນທາງການ ໃນເວລາທີ່ເໝາະສົມ ຊຶ່ງພະ ນະ ທ່ານ ສະ ເຫຼີມໄຊ ກົມມະສິດ ກໍໄດ້ສະແດງຄວາມ ຂອບໃຈຕໍ່ຄຳຊົມ ເຊີຍ ແລະ ຄຳເຊື້ອເຊີນ ດັ່ງກ່າວ ພ້ອມທັງສະແດງຄວາມໝາຍໝັ້ນ ທີ່ຈະຮ່ວມເຮັດວຽກ ກັບຝ່າຍສິງກະໂປ ຢ່າງໃກ້ ຊິດ ເພື່ອສືບຕໍ່ເສີມຂະຫຍາຍການ ພົວພັນຮ່ວມມືຂອງສອງປະເທດໃຫ້ໄດ້ຮັບ ການພັດທະນາຍິ່ງໆຂຶ້ນໃນຕໍ່ໜ້າ.

ພະນະທ່ານ ສະເຫຼີມໄຊ ກົມມະ ສິດ ຍັງໄດ້ຕາງໜ້າໃຫ້ລັດຖະບານ ແລະ ປະຊາຊົນລາວ ສະແດງຄວາມຍິນ ຍັນທີ່ ຈະໃຫ້ການສະໜັບສະໜຸນ ແລະ ການ ຮ່ວມມືຢ່າງເຕັມທີ່ ຕໍ່ການເປັນປະທານອາ ຊຽນຂອງ ສິງກະໂປ ໃນປີ 2027 ທີ່ຈະ ມາເຖິງນີ້ ພ້ອມທັງໄດ້ສະແດງຄວາມ ຂອບໃຈຢ່າງຈິງໃຈໄປຍັງສິງກະໂປ ທີ່ໄດ້ ໃຫ້ການສະໜັບສະໜຸນ ໃນໄລຍະທີ່ ສປປ ລາວ ເປັນປະທານອາຊຽນ ໃນປີ 2024 ທີ່ຜ່ານມາ.

ສອງຝ່າຍ ໄດ້ເຫັນດີເປັນເອກະພາບ ແລະ ຕີລາຄາສູງ ຕໍ່ການພົວພັນຮ່ວມມື ລະຫວ່າງສອງປະເທດ ຕະຫຼອດໄລຍະ 52 ປີຜ່ານມາ ທີ່ໄດ້ຮັບການເສີມຂະຫຍາຍ ແລະ ພັດທະນາຂຶ້ນເປັນກ້າວໆ ຊຶ່ງສະແດງ ອອກໃນການພົບປະແລກປ່ຽນການ ຢ້ຽມຢາມ ລະຫວ່າງ ການນຳຂັ້ນສູງຂອງ ສອງປະເທດຢ່າງເປັນປົກກະຕິ ລວມເຖິງ ການໄປມາຫາສູ່ກັນລະຫວ່າງປະຊາຊົນ ສອງຊາດ ທີ່ນັບມື້ນັບເພີ່ມຂຶ້ນ.

ສອງຝ່າຍ ໄດ້ປຶກສາຫາລືກ່ຽວກັບ ການເສີມຂະຫຍາຍການພົວພັນຮ່ວມມືໃນ ຕໍ່ໜ້າ ເປັນຕົ້ນ ແມ່ນການຮ່ວມມືດ້ານ ເສດຖະກິດ, ການຄ້າ, ການ ລົງທຶນ,ພະລັງງານສະອາດ, ການພັດທະນາ ຊັບພະຍາກອນມະນຸດ, ສົນເຊື່ອການທ່ອງ ແລະ ຂົງເຂດອື່ນໆ.

ສປປ ລາວ ແລະ ສ ສິງກະໂປ ໄດ້ ສ້າງຕັ້ງສາຍພົວພັນການທູດຮ່ວມກັນ ໃນ ວັນທີ 2 ທັນວາ 1974. ປັດຈຸບັນ, ສິງກະໂປ ຈັດເປັນອັນດັບທີ 9 ຂອງການ ລົງທຶນໂດຍກົງຈາກຕ່າງປະເທດ (FDI) ໃນ ສປປ ລາວ, ໂດຍມີມູນຄ່າການລົງທຶນ ລວມ 409 ລ້ານໂດລາ. ນັບແຕ່ປີ 2021- 2025, ມູນຄ່າການຄ້າສອງຝ່າຍ ລະຫວ່າງ ລາວ ແລະ ສິງ ກະໂປ ມີມູນຄ່າ ລວມປະມານ 870 ລ້ານໂດລາ. ມາເຖິງ ປັດຈຸບັນ, ມີພະນັກງານ-ລັດຖະກອນ ຂອງ ສປປ ລາວ ຫຼາຍກວ່າ 17.202 ຄົນ ໄດ້ເຂົ້າຮ່ວມ ແລະ ໄດ້ຮັບຜົນປະ ໂຫຍດ ຈາກການຝຶກອົບຮົມໄລຍະສັ້ນ ພາຍໃຕ້ ໂຄງການຮ່ວມມືສິງກະໂປ (Singapore Cooperation Programs - SCP) ແລະ ຂໍ້ລິເລີ່ມ ເພື່ອການເຊື່ອມໂຍງອາຊຽນ (Initiative for ASEAN Integration - IAI) ນັບຕັ້ງແຕ່ປີ 1992 ເປັນຕົ້ນມາ.ປັດຈຸບັນ, ມີສາຍການ ບິນໂດຍກົງ ສິງກະໂປ - ລາວ (Scoot Airlines) ຈຳນວນ 3 ຖ້ຽວບິນ/ອາທິດ ແລະ ມີແຜນທີ່ຈະເປີດຖ້ຽວບິນເພີ່ມ ເປັນ 5 ຖ້ຽວບິນ/ອາທິດ.

ຂ່າວ: ກົມການຂ່າວ ກຕຫ

ຂ່າວພາຍໃນ · 15:52 ໂມງ · ອ່ານ 11 ຄັ້ງ

ສະໜາມກິລາຍິງປືນຄົບວົງຈອນ ມາດຕະຖານສາກົນ 2 ທັນວາ ສ້າງສຳເລັດແລ້ວ 80%



ຕອນເຊົ້າວັນທີ 16 ຕຸລາ 2026 ນີ້, ສະຫາຍ ພົນຕີ ກົງທອງ ສຸຂະວົງ ກຳມະການຄະນະປະຈຳພັກກະຊວງ ຮອງລັດຖະມົນຕີກະຊວງປ້ອງກັນປະເທດ ໄດ້ລົງກວດກາ ຊຸກຍູ້ໂຄງການກໍ່ສ້າງສະໜາມກິລາຍິງປືນ ຄົບວົງຈອນ ມາດຕະຖານສາກົນ 2 ທັນວາ ຂອງກອງບັນຊາການ ທະຫານແຂວງ ຫຼວງພະບາງ, ມີສະຫາຍ ພົນຈັດຕະວາ ທອງລາ ໄຊຍະວົງສັກ ກຳມະການພັກແຂວງ ຫົວໜ້າການ ທະຫານກອງບັນຊາການທະຫານແຂວງ ຫຼວງພະບາງ, ມີ ທ່ານ ຖາວອນ ອາດສະໝຸດ ປະທານບໍລິສັດ ຫຼວງພະບາງ ສະມາດ ຊິດຕີ້ ຈຳກັດຜູ້ດຽວ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ໂຄງການກໍ່ສ້າງ ສະໜາມກິລາຍິງປືນ ຄົບວົງຈອນ ມາດຕະຖານສາກົນ 2 ທັນວາ ຂອງກອງບັນຊາການ ທະຫານແຂວງ ຫຼວງພະບາງ ຕັ້ງຢູ່ບ້ານໂນນສະອາດ ນະຄອນ ຫຼວງພະບາງ, ໂຄງການດັ່ງກ່າວເປັນອາຄານ ຊັ້ນດຽວ 3 ຫຼັງ, ໃນນັ້ນປະກອບມີ: ອາຄານຕ້ອນຮັບ, ບ່ອນວ່າງສະແດງສິນຄ້າ ແລະຈຳໜ່າຍ ເຄື່ອງທີ່ລະນຶກ, ຮ້ານອາຫານ ແລະກາເຟ, ອາຄານຫ້ອງການ ແລະ ການບໍລິການຍິງ ປືນໃນຮົ່ມ, ອາຄານວາງສະແດງພິພິຕະພັນ ແລະ ຫໍມູນເຊື້ອຂອງກອງທັບປະຊາຊົນ ລາວ, ນອກນີ້ຍັງມີສະໜາມຍິງປືນກາງແຈ້ງ 3 ສະໜາມ ເພື່ອເປັນບ່ອນຝຶກແອບສິນ ລະປະຍຸດ - ຍຸດທະວິທີ ທາງດ້ານ ວຽກງານປ້ອງກັນຊາດ - ປ້ອງກັນຄວາມ ສະຫງົບ ໃຫ້ແກ່ກອງບັນຊາການທະຫານ ແຂວງ ແລະ ກອງກຳລັງປະກອບອາວຸດ ທຸກພາກສ່ວນ, ມີເດີ່ນຈອດລົດທີ່ກ້ວາງ ຂວາງສາມາດຮອງຮັບນັກທ່ອງທ່ຽວເພື່ອ ມາໃຊ້ບໍລິການໄດ້ຢ່າງເຕັມທີ່ ແລະ ຍັງ ຮອງຮັບການຈັດງານວາງສະແດງສິນຄ້າ ທ້ອງຖິ່ນ ຕື່ມອີກ.

ໂຄງການດັ່ງກ່າວໄດ້ເລີ່ມລົງມືກໍ່ສ້າງ ມາແຕ່ວັນທີ 1 ຕຸລາ 2025 ເປັນຕົ້ນມາ, ຄາດກະຈະໃຫ້ສຳເລັດການກໍ່ສ້າງໃນເດືອນ ທັນວາ 2026, ໂດຍແມ່ນບໍລິສັດ ຫຼວງ ພະບາງ ສະມາດ ຊິດຕີ້ ຈຳກັດຜູ້ດຽວ ເປັນ ຜູ້ລົງທຶນກໍ່ສ້າງ. ຜ່ານການລົງກວດກາ ປະເມີນຜົນຕົວຈິງເຫັນວ່າມາຮອດປະຈຸບັນ ໂຄງການດັ່ງກ່າວ ແມ່ນສຳເລັດໄປແລ້ວ 80% ແລະຈະເປີດນຳໃຊ້ຢ່າງເປັນ ທາງການໃນຕົ້ນເດືອນມັງກອນປີ 2027 ນໍ່ໆນີ້.

ສະຫາຍ ພັນເອກ ສົງທອງ ອິນທະ ວອງ ຄະນະພັກກອງບັນຊາການ ຫົວໜ້າ ຫ້ອງການກອງບັນຊາການທະຫານແຂວງ ຫຼວງພະບາງ ໄດ້ໃຫ້ສຳພາດວ່າ: ຈຸດປະສົງ ຫຼັກຂອງໂຄງການນີ້, ແມ່ນເພື່ອຊຸກຍູ້ ສົ່ງເສີມວຽກງານປ້ອງກັນຊາດ - ປ້ອງກັນ ຄວາມສະຫງົບໃນທ້ອງຖິ່ນ, ພະນັກງານ - ນັກຮົບສາມາດເຂົ້າໄປຝຶກແອບໂດຍບໍ່ໄດ້ ເສຍຄ່າ. ນອກນີ້ ຍັງເປັນການສົ່ງເສີມການ ທ່ອງທ່ຽວທັງພາຍໃນ ແລະຕ່າງປະເທດ, ກະຕຸ້ນດ້ານເສດຖະກິດທ້ອງຖິ່ນ, ເຮັດໃຫ້ ປະຊາຊົນມີວຽກເຮັດງານທຳ ແລະ ສ້າງ ລາຍຮັບໃຫ້ກັບກອງບັນຊາການທະຫານ ແຂວງ ຫຼວງພະບາງ ຕື່ມອີກ.

ຂ່າວ: ຂ່າວທະຫານແຂວງຫຼວງພະ ບາງ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 15 ໃນສະບັບນີ້

ຂ່າວພາຍໃນ · 10:02 ໂມງ · ອ່ານ 11 ຄັ້ງ

ເມືອງສົບເບົາ ທຳລາຍສິນຄ້າໝົດອາຍຸ ແລະ ເຊື່ອມຄຸນນະພາບ ທີ່ຍຶດໄດ້ຈາກ 20 ຮ້ານຄ້າ”



ເພື່ອເປັນການປະຕິບັດຕາມພາລະບົດບາດສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນບົນພື້ນຖານຕາມນິຕິກຳທີ່ລະບຸໄວ້ເປັນການຮັບປະກັນຜົນປະໂຫຍດອັນຊອບທຳ,ຄວາມປອດໄພທາງດ້ານສຸຂະພາບຂອງຜູ້ບໍລິໂພກ ໃຫ້ໄດ້ຊົມໃຊ້ສິນຄ້າທີ່ມີຄຸນນະພາບ, ໃຫ້ໄດ້ມາດຕະຖານ.

ມາໃນວັນທີ 15 ຕຸລາ 2026 ນີ້. ຄະນະຄວບຄຸມອາຫານ ແລະ ຢາເມືອງສົບເບົາ ແຂວງຫົວພັນ ໄດ້ທຳລາຍສິ້ນຄ້າໝົດອາຍຸເຊື່ອມຄຸນນະພາບຂຶ້ນຢູ່ທີ່ສະໜາມຂີ້ເຫຍື້ອເກົ່າເມືອງສົບເບົາໃຫ້ກຽດເຂົ້າຮ່ວມເປັນສັກຂີພິຍານໂດຍຄະນະຮັບຜິດຊອບທີ່ກ່ຽວຂ້ອງເຂົ້າຮ່ວມ.

ເຄື່ອງທີ່ນຳມາທຳລາຍຄັ້ງນີ້ແມ່ນໄດ້ມາຈາກການລົງກວດກາຕາມຮ້ານຂາຍສົ່ງ ແລະ ຂາຍຍ່ອຍຕ່າງໆໃນທົ່ວເມືອງ ເຊິ່ງມີຄະນະຄວບຄຸມອາຫານ ແລະ ຢາເມືອງສົບເບົາ ໄດ້ລົງກວດກາເຄື່ອນໃຫວໃນລະຫ່ວາງ ວັນທີ31/08/2026 – 09/09/2026

ຜ່ານມານີ້ໃນທົ່ວເມືອງທົ່ມງານໄດ້ລົງກວດກາຮ້ານຂາຍຍົກ 3 ຮ້ານ.ຮ້ານຍ່ອຍ 115 ຮ້ານ. ຮ້ານອາຫານ 9 ຮ້ານ. ໃນນັ້ນກວດກາຕົວຈິງ 75 ຮ້ານພົບສິ້ນຄ້າໝົດອາຍຸ ແລະ ເຊື່ອມຄຸນນະພາບຈຳນວນ 20 ຮ້ານ. ເຊິ່ງມີປະເພດຕ່າງໆເຊັ່ນ: ນ້ຳອັດລົມ, ນົມ, ເອັມຮ້ອຍ, ໝີ່, ເຂົ້າໜົມ ແລະ ເຄື່ອງສຳອາງມີສະບູ, ແປ້ງ, ຄີມ.

ລວມມູນຄ່າສິ້ນຄ້າທັ້ງໝົດ 4 ລ້ານ ກວ່າ.

ຂ່າວພາຍໃນ · 14:38 ໂມງ · ອ່ານ 10 ຄັ້ງ

ແຂວງຄຳມ່ວນລົງກວດກາພ້ອມທັງເຮັດບົດບັນທຶກກ່າວເຕືອນ ເຈົ້າຂອງປ້ຳນ້ຳມັນ ທີ່ຫົວຈ່າຍບໍ່ຢູ່ໃນເກນມາດຕະຖານທີ່ກຳນົດ ແລະ ຍຶດຊີ້ງຊັ່ງຕາມທ້ອງຕະຫຼາດ



ໃນລະຫວ່າງ ວັນທີ 14 – 17 ຕຸລາ 2026 ພະແນກຄຸ້ມຄອງ ແລະ ແກ້ໄຂຄຳສະເໜີ ວຽກງານມາດຕະຖານ ແລະ ວັດແທກ ໄດ້ຮ່ວມກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຄຳມ່ວນ ລົງກວດກາບໍລິມາດຫົວຈ່າຍປ້ຳນ້ຳມັນເຊື້ອໄຟ ແລະ ຊີ້ງຊັ່ງ ຕາມທ້ອງຕະຫຼາດພາຍໃນເຂດສະບານ ແຂວງຄຳມ່ວນ, ໃນນີ້ກວດກາບໍລິມາດຫົວຈ່າຍໄດ້ຈຳນວນ 12 ປ້ຳ ແລະ ກວດກາຊີ້ງຊັ່ງຕະຫຼາດໄດ້ຈຳນວນ 102 ຮ້ານ.

ຜ່ານການກວດກາບໍລິມາດຫົວຈ່າຍປ້ຳນ້ຳມັນເຊື້ອໄຟຕົວຈິງ ເຫັນວ່າ: ນ້ຳມັນກາຊອນ ແລະ ນ້ຳມັນແອັດຊັງ ບາງປ້ຳຍັງມີຫົວຈ່າຍຈຳນວນໜຶ່ງແມ່ນບໍ່ນອນຢູ່ໃນເກນມາດຕະຖານທີ່ກຳນົດ ±25, ແຕ່ສະພາບຕູ້ຈ່າຍ ແລະ ກົ໋ວໜີບຊິມລ໋ອກ ຢູ່ໃນສະພາບປົກກະຕິ, ເມື່ອມີການໃຊ້ງານເປັນປະຈຳອາດເຮັດໃຫ້ຫົວຈ່າຍມີການອ່ານຄ່າຫຼຸດລົງ.

ດັ່ງນັ້ນ ທີມກວດກາຈຶ່ງໄດ້ປັບໃຫ້ຢູ່ໃນຄ່າອະນຸຍາດທີ່ກຳນົດ ພ້ອມທັງເຮັດບົດບັນທຶກກ່າວເຕືອນໄວ້, ສຳຫຼັບຊີ້ງຊັ່ງຕະຫຼາດ ແມ່ນຍຶດໄດ້ຊີ້ງຊັ່ງທີ່ບໍ່ຖືກຕ້ອງຈຳນວນ 13 ໜ່ວຍເພື່ອເອົາມາທຳລາຍ.

ຖ້າຫາກພົບເຫັນຄວາມຜິດປົກກະຕິ ຫຼື ສົງໃສກ່ຽວກັບບໍລິມາດຫົວຈ່າຍປ້ຳນ້ຳມັນເຊື້ອໄຟ ຫຼື ຊື້ສິນຄ້າ ແລ້ວຊັ່ງເຄື່ອງໄດ້ບໍ່ເຕັມຕາມຈຳນວນສາມາດໂທຫາສາຍດ່ວນ 1513 ເພື່ອຮ້ອງຮຽນໄດ້.

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

◆ ຂ່າວພາຍໃນ · 15:41 ໂມງ · ອ່ານ 8 ຄັ້ງ

ທ່ານ ແສງສາທິດ ພິມເມືອງ ໄດ້ກ່າວ ເນັ້ນຄວາມເປັນລະບຽບຮຽບຮ້ອຍ, ສະອາດງາມຕາ ໃນງານ ບຸນຊ່ວງເຮືອທ່າອັດຈັນທີ່ຈະມາເຖິງນີ້ ກົງກັບວັນທີ 25-27 ຕຸລາ 2026



ປະທານຈັດງານບຸນພັນສາປະວໍຣະນາ ແລະ ບຸນຊ່ວງເຮືອ ທີ່ທ່າອັດຈັນ ເມືອງຈັນທະບູລີ ແນະນຳຮ້ານຄ້າທຸກພາກສ່ວນຕ້ອງມີ ຖົງຢາງດຳ ເພື່ອໃສ່ຂີ້ເຫຍື້ອຕ່າງໆ ຫຼັງເວລາເລີກງານທຸກຄືນ.

ບຸນອອກພັນສາປະວໍຣະນາ ແລະ ບຸນຊ່ວງເຮືອ ທີ່ທ່າອັດຈັນ ເມືອງຈັນທະບູລີ ປີນີ້ແມ່ນກົງກັບວັນທີ 25-27 ຕຸລາ 2026 ກົງກັບມື້ຂຶ້ນ 14 ຄ่ำ ຫາມື້ແຮມ 1 ຄ่ำ ເດືອນ 11 ລາວ ພສ 2569. ງານບຸນປີນີ້ ທ່ານ ແສງສາທິດ ພິມເມືອງ ປະທານຄະນະກຳມະການປົກຄອງເມືອງຈັນທະບູລີ ປະທານຈັດງານບຸນອອກພັນສາປະວໍຣະນາ ແລະ ບຸນຊ່ວງເຮືອ ທີ່ທ່າອັດຈັນ ເມືອງຈັນທະບູລີ ປະຈຳປີ 2026 ໄດ້ມີຄວາມພ້ອມໃນດ້ານຕ່າງໆ ເປັນຕົ້ນ ວຽກງານອະນາໄມທຳຄວາມສະອາດ ໄດ້ເນັ້ນທຸກພາກສ່ວນທີ່ເຂົ້າຮ່ວມວາງສະແດງ ແລະ ຂາຍສິນຄ້າ ກໍຄື ຮ້ານຄ້າຕ້ອງມີຖົງຢາງດຳເພື່ອໃສ່ຂີ້ເຫຍື້ອ, ສິ່ງເສດເຫຼືອຕ່າງໆ ເພື່ອເຮັດໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດງາມຕາ ແລະ ສວຍງາມ.

ໃນໂອກາດຖະແຫຼງຂ່າວ ກ່ຽວກັບການກະກຽມບຸນອອກພັນສາປະວໍຣະນາ ແລະ ບຸນຊ່ວງເຮືອ ທີ່ທ່າອັດຈັນ ເມືອງຈັນທະບູລີ ປະຈຳປີ 2026. ທ່ານ ແສງສາທິດ ພິມເມືອງ ໄດ້ກ່າວຕໍ່ສື່ມວນຊົນເມື່ອບໍ່ດົນມານີ້ ທີ່ນະຄອນຫຼວງວຽງຈັນ ວ່າ: ປັດຈຸບັນການກະກຽມຈັດງານບຸນດັ່ງກ່າວ ໄດ້ມີຄວາມພ້ອມຮອບດ້ານໃນດ້ານຕ່າງໆ ໂດຍສະເພາະ ກົດຈະກຳວຽກງານການອະນາໄມທຳຄວາມສະອາດ ໄດ້ຊຸກຍູ້ຂະບວນການອອກແຮງງານອະນາໄມສະຖານທີ່ຈັດງານ ແລະ ຂອບເຂດພາຍນອກຈຳນວນໜຶ່ງໃຫ້ມີຄວາມສະອາດ ແລະ ສວຍງາມ.

ພ້ອມນັ້ນ, ຍັງໄດ້ຊຸກຍູ້, ແນະນຳ ທຸກພາກສ່ວນທີ່ເຂົ້າຮ່ວມວາງສະແດງ ແລະ ຂາຍສິນຄ້າຢູ່ໃນງານບຸນຕ້ອງມີຖົງຢາງດຳ ເພື່ອໃສ່ຂີ້ເຫຍື້ອ, ສິ່ງເສດເຫຼືອຕ່າງໆ, ເວລາເລີກງານແຕ່ລະຄືນຕ້ອງເຮັດອະນາໄມບໍລິເວນຮ້ານຂອງຕົນເອງ ແລ້ວເອົາຖົງຢາງໃສ່ປະໄວ້ຂ້າງຮ້ານ ເພື່ອໃຫ້ພາກສ່ວນອະນາໄມມາເກັບເອົາໄປຖິ້ມ. ພາຍຫຼັງເລີກງານບຸນໃນເວລາ 23:00 ໂມງ ແມ່ນເຂົ້າອະນາໄມ ແລະ ໃຫ້ສຳເລັດພາຍໃນ 5:00 ໂມງ (ຕອນເຊົ້າ).

ພ້ອມນັ້ນ, ຜູ້ມາທ່ຽວງານບຸນ ຈົ່ງເກັບມ້ຽນເສດອາຫານຂອງຕົນໃຫ້ເປັນລະບຽບຮຽບຮ້ອຍ ຖົ້ມໃສ່ຖັງຂີ້ເຫຍື້ອ, ຖົງຢາງຂີ້ເຫຍື້ອ ຫຼື ຈຸດຖົ້ມຂີ້ເຫຍື້ອ ຢ່າຖົ້ມຂີ້ເຫຍື້ອຊະຊາຍ ເພື່ອສະດວກຕໍ່ຜູ້ເກັບມ້ຽນໄປຖົ້ມ ແລະ ເພື່ອຄວາມສະອາດງາມຕາ ແລະ ສວຍງາມຂອງງານບຸນຕໍ່ແຂກຄົນມາພົບເຫັນ.

◆ ຂ່າວພາຍໃນ · 11:37 ໂມງ · ອ່ານ 8 ຄັ້ງ

ແຂວງຜົ້ງສາລີ ຈຸດທຳລາຍຢາເສບຕິດ ສະຫຼອງວັນແຫ່ງ ຊາດຕ້ານຢາເສບຕິດ ຄົບຮອບ 25 ປີ



ພິທີດັ່ງກ່າວ, ໄດ້ຈັດຂຶ້ນໃນວັນທີ 15 ຕຸລາ 2026 ໂດຍ ມີ ທ່ານ ບຸນທະວີ ສໍສຸກັນ ປະທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນແຂວງ, ມີ ພິຈວ ຄຳຈັນ ແສງລາວົງ ຫົວໜ້າກອງບັນຊາການ ປກສ ແຂວງ ຮອງປະ ທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບ ຕິດ ຂັ້ນແຂວງ, ພ້ອມດ້ວຍບັນດາ ທ່ານ ກຳມະການປະຈຳພັກແຂວງ, ກຳມະການພັກແຂວງ, ຫົວໜ້າ-ຮອງຫົວໜ້າພະແນກ,ອົງການທຽບເທົ່າ,ສອງ ກຳລັງປ້ອງກັນຊາດ-ປ້ອງ ກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວ ເຂົ້າຮ່ວມ.

ໃນພິທີ, ພ້ອ ບຸນລຽນ ແສນວົງ ຮອງຫົວໜ້າກອງບັນ ຊາການໄດ້ຂຶ້ນຜ່ານບົດສະຫຼຸບການຈັດຕັ້ງປະຕິບັດວຽກ ງານກວດກາ ແລະ ຄວບຄຸມຢາເສບຕິດ ໃນ ຕະຫຼອດໄລ ຍະ 1 ປີ ຜ່ານມາ, ອັນພົ້ນເດັ່ນສາມາດກວດພົບເຫັນເນື້ອທີ່ລັກລອບປູກຝິ່ນຫ໋ວແຂວງ ມີ 1.304 ຈຸດ, ລົງທຳລາຍທັງໝົດ 22 ກຸ່ມບ້ານ, ມີ 454 ຕອນ, ໃນເນື້ອທີ່ 79,01 ເຮັດຕາ, ບໍ່ໄດ້ທຳລາຍ 18 ເຮັກຕາ, ການສະໜັບສະໜຸນທຶນຮອນຂອງບັນດາບໍລິສັດສິ່ງເສີມປູກພືດທົດແທນການປູກຝິ່ນແຂວງຢຸນນານ ສປ ຈີນ ລວມມີ 11 ບໍລິສັດ, ສາ ມາດມ້າງຄະດີຢາເສບຕິດ ປະເພດ ຢາບ້າ 72 ເລື່ອງ, ຢາຝິ່ນ 9 ເລື່ອງ, ຂອງກາງຢາບ້າ 65.813 ເມັດ, ຂອງກາງຢາຝິ່ນ 37,03 ກິໂລກຼາມ ແລະອື່ນໆ. ຈາກນັ້ນ, ກໍຜ່ານຂໍ້ຕົກ ລົງ ຂອງປະທານປົກຄອງແຂວງ ສະບັບເລກທີ 785/ຄປຂ, ລົງວັນທີ 8 ຕຸລາ 2026 ວ່າ ດ້ວຍການອະນຸມັດທຳລາຍຂອງກາງ ປະເພດສິ່ງເສບຕິດ ທີ່ມີຄຳຕັດສິນສານໃຊ້ ໄດ້ຢ່າງເດັດຂາດ, ຂໍ້ຕົກລົງເລກທີ 327/ ຄປຂ, ລົງວັນທີ 9 ຕຸລາ 2026 ວ່າດ້ວຍ ການແຕ່ງຕັ້ງອະນຸກຳມະການທຳລາຍຂອງ ກາງຢາເສບຕິດ ແລະ ຜ່ານຂໍ້ຕົກລົງຂອງ ກະຊວງປ້ອງກັນຄວາມສະຫງົບສະບັບ ເລກທີ 1819/ປກສ, ລົງວັນທີ 23 ກໍລະກົດ 2025 ວ່າດ້ວຍການມອບຫຼຽນ ກາປ້ອງກັນຄວາມສະຫງົບ, ໃຫ້ກຽດຂຶ້ນ ປະດັບຫຼຽນກາ ໂດຍ ທ່ານ ບຸນທະວີ ສໍສຸ ກັນ ປະທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນແຂວງ, ຂໍ້ຕົກລົງເລກທີ 1820/ປກສ, ລົງວັນທີ 23 ກໍລະກົດ 2025 ວ່າດ້ວຍການມອບ ໃບຍ້ອງຍໍ ກະຊວງປ້ອງກັນຄວາມສະຫງົບ, ຂໍ້ ຕົ ກ ລົ ງ ສ ະ ບັ ບ ເ ລ ກ ທີ 3677/ ກມປສ,ລົງວັນທີ 16 ກໍລະກົດ 2025 ວ່າດ້ວຍການມອບໃບຍ້ອງຍໍຂອງກົມໃຫຍ່ ການເມືອງປ້ອງ ກັນຄວາມສະຫງົບ, ໃຫ້ ກຽດມອບໃບຍ້ອງຍໍ ໂດຍ ພິຈວ ຄຳຈັນ ແສງລາວົງ ຫົວໜ້າກອງບັນຊາການ ປກສ ແຂວງ ຮອງປະທານຄະນະກຳມະການ ກວດກາ ແລະ ຄວບຄຸມຢາເສບຕິດ ຂັ້ນ ແຂວງ.

ໃນໂອກາດດັ່ງກ່າວ, ຍັງໄດ້ຈັດພິທີ ທຳລາຍຢາເສບຕິດ, ເຊິ່ງຂອງກາງ ທີ່ໄດ້ຮັບ ຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນຳມາຈຸດທຳລາຍໃນຄັ້ງນີ້ ລວມມີ ຢາເສບ ຕິດ ປະເພດ ຢາບ້າ 60.820 ເມັດ, ເຮໂຣອິນ 90 ແທ່ງ ນ້ຳໜັກ 33,07 ກິໂລກຼາມ. ຈາກນັ້ນ, ປະທານ ແລະ ບັນດາ ທ່ານແຂກທີ່ເຂົ້າຮ່ວມ ກໍໄດ້ ພ້ອມກັນຈຸດທຳລາຍຢາເສບ ຕິດ ຢ່າງເປັນ ທາງການ.

◆ ຂ່າວພາຍໃນ · 15:12 ໂມງ · ອ່ານ 7 ຄັ້ງ

ບໍລິຄຳໄຊ ເຊັນສັນຍາ 3 ໂຄງການລົງທຶນພັດທະນາໂຄງການໄຟຟ້າແສງຕາເວັນຂະໜາດ 5 ເມກາວັດ



ແຫລ່ງຂ່າວຈາກ ແຂວງບໍລິຄຳໄຊ ໃຫ້ຮູ້ວ່າ: ພິທີລົງນາມເຊັນສັນຍາວ່າດ້ວຍການລົງທຶນພັດທະນາໂຄງການໄຟຟ້າແສງຕາເວັນ ຂະໜາດ 5 ເມກາວັດ ລະຫວ່າງ ອົງການປົກຄອງແຂວງບໍລິຄຳໄຊ ກັບບໍລິສັດປາກຊັນ ພັດທະນາພະລັງງານຈຳກັດ ແລະ ບໍລິສັດລາວພະລັງງານສະອາດຈຳກັດ ຈັດຂຶ້ນໃນວັນທີ 15 ຕຸລາ 2026 ຜ່ານມາທີ່ ເມືອງປາກຊັນ ແຂວງບໍລິຄຳໄຊ ຊຶ່ງເປັນການລົງທຶນໃນຮູບແບບກໍ່ສ້າງເປັນເຈົ້າຂອງ ແລະ ດຳເນີນງານ (BOO) ເນື້ອທີ່ດິນທີ່ນຳໃຊ້ເຂົ້າໃນໂຄງການແມ່ນເປັນດິນຂອງບໍລິສັດເອງ ຈຳນວນ 3 ໂຄງການຄື: ໂຄງການໄຟຟ້າແສງຕາເວັນ ຂະໜາດ 5 ເມກາວັດ ລົງມາ ໃນເນື້ອທີ່ 9.982 ຕາແມັດ ຢູ່ບ້ານທ່າຍ ເມືອງທ່າພະບາດ, ໂຄງການໄຟຟ້າແສງຕາເວັນຂະໜາດ 5 ເມກາວັດ ໃນເນື້ອທີ່ 64.731 ຕາແມັດ ຢູ່ບ້ານຫວ້ຍສຽດ ເມືອງປາກຊັນ ແລະ ໂຄງການໄຟຟ້າແສງຕາເວັນ ຂະໜາດ 5 ເມກາວັດ ໃນເນື້ອທີ່ 63.217 ຕາແມັດ ຢູ່ບ້ານໂພນສະອາດ ເມືອງປາກຊັນ ແຂວງບໍລິຄຳໄຊ ລະຫວ່າງອົງການປົກຄອງແຂວງບໍລິຄຳໄຊ.

ຕາງໜ້າລົງນາມຄັ້ງນີ້ໂດຍ ທ່ານ ແກ້ວວິລາ ທິບດາລາ ຫົວໜ້າຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງບໍລິຄຳໄຊ ແລະ ທ່ານ ນາງ ພິລັດດາ ພະໄຊສິສຸນິນ ອຳນວຍການບໍລິສັດລາວພະງານສະອາດ ຈຳກັດ, ມີທ່ານ ສົມໃຈ ຄຸນພະໄຊ ຮອງປະທານຄະນະກຳມະການປົກຄອງແຂວງບໍລິຄຳໄຊ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ຂ່າວ: ພູວົງ, ພາບ: ວຽງສະຫວັນ

◆ ຂ່າວພາຍໃນ · 09:39 ໂມງ · ອ່ານ 7 ຄັ້ງ

ລັດຖະມົນຕີກະຊວງ ຍທຂ ພ້ອມຄະນະ ຕິດຕາມຊຸກຍູ້ ໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ 13 ໃຕ້ ຊ່ວງ ນະຄອນຫຼວງວຽງຈັນ ຫາ ແຂວງບໍລິຄຳໄຊ (ກມ 21-ກມ 71)



ວັນທີ 17 ຕຸລາ 2026 ທ່ານ ເຫຼັກໄຫຼ ສີວິໄລ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ພ້ອມຄະນະ ຕິດຕາມ ຊຸກຍູ້ ໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ 13 ໃຕ້ ຊ່ວງນະຄອນຫຼວງວຽງຈັນ ຫາ ແຂວງບໍລິຄຳໄຊ(ກມ 21-ກມ 71).

ໃນໂອກາດທ່ານລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ເຄື່ອນໄຫວຄັ້ງນີ້ ທ່ານ ສຸກສາຄອນ ຊູຕັນນຸວົງ ຫົວໜ້າໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ 13 ໃຕ້ ແຕ່ ກມ 21- ກມ 71 ລາຍງານວ່າ: ໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ (ກມ 21 ຫາ ກມ 71) ເລີ່ມແຕ່ບ້ານ ໂຄກສີວິໄລ ເມືອງໄຊທານີ ນະຄອນຫຼວງວຽງຈັນ ຫາ ບ້ານ ໄຊສະຫວ່າງ ເມືອງທ່າພະບາດ ແຂວງບໍລິຄຳໄຊ, ມີຄວາມຍາວທັງໝົດ 50 ກິໂລແມັດ, ເປັນເສັ້ນທາງປູຢາງຂໍ້ວ(Asphalt).

ໃນຮູບແບບສັນຍາ OPBRC (ກໍ່ສ້າງ 3 ປີ ແລະ ບຳລຸງຮັກສາ 7 ປີ), ເລີ່ມຈັດຕັ້ງປະຕິບັດແຕ່ວັນທີ 15 ກໍລະກົດ 2025 ມາຮອດເດືອນກັນຍາ 2026 (ຜ່ານມາ 14 ເດືອນ) ມີຄວາມຄືບໜ້າຂອງໜ້າວຽກຕົວຈິງສຳເລັດແລ້ວ 42.31%, ປະຕິບັດໄດ້ຕາມແຜນການ ແລະ ໄດ້ສຳເລັດປູຢາງຂໍ້ວ(Asphalt)ໂດຍພື້ນຖານແລ້ວ ຂອງໜ້າວຽກ Milestone 1 ແລະ Milestone 3. ເຊິ່ງຄາດວ່າຈະໃຫ້ສຳເລັດຕາມແຜນການໃນວັນທີ 15 ກໍລະກົດ 2028.

ນອກຈາກນັ້ນ ທ່ານ ຫົວໜ້າໂຄງການ ແລະ ບໍລິສັດຜູ້ຮັບເໝົາກໍ່ສ້າງ (ລັດວິສາຫະກິດ ກໍ່ສ້າງຂົວທາງເລກ 8 ຮ່ວມກັບ ບໍລິສັດ ສົມໄຊ ຈະເລີນກໍ່ສ້າງ) ກໍ່ໄດ້ໃຫ້ຄຳໝັ້ນສັນຍາ ພ້ອມທັງຢືນຢັນວ່າ ຕົ້ນຝົນ ປີ 2027 ຄາດວ່າຈະໃຫ້ສຳເລັດປູຢາງຂໍ້ວ(Asphalt) ຊັ້ນ 1 ເພື່ອເຮັດໃຫ້ການຈາລະຈອນມີຄວາມສະດວກ, ໂລ່ງລ່ຽນ ພ້ອມທັງຮັບປະຄວາມປອດໄພ.

ໃນໂອກາດດັ່ງກ່າວນີ້ ທ່ານ ເຫຼັກໄຫຼ ສີວິໄລ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຜົນສຳເລັດໂຄງການ ພ້ອມທັງເນັ້ນໃຫ້ເອົາໃຈໃສ່ໂດຍສະເພາະແມ່ນ ການຄຸ້ມຄອງການກໍ່ສ້າງໃຫ້ໄດ້ມາດຕະຖານເຕັກນິກ, ໃຫ້ສຸມໃສ່ນຳໃຊ້ກົນຈັກທັນສະໄໝ, ການແກ້ໄຂສິ່ງກີດຂວາງ, ການຄຸ້ມຄອງການຈາລະຈອນ ແລະ ຂີ້ຝຸ່ນໃນເຂດຊຸມຊົນໜາແໜ້ນ ຕ້ອງໄດ້ສີດນ້ຳ ແລະ ຕິດປ້າຍເຕືອນຄວາມປອດໄພຢ່າງຕໍ່ເນື່ອງ.

ພ້ອມທັງສືບຕໍ່ ບັນດາໜ້າວຽກຕ່າງໆເປັນຕົ້ນ: ເລັ່ງດຳເນີນງານວຽກດິນ, ຄັນທາງ, ແລະ ວຽກຊັ້ນທາງ, ສືບຕໍ່ປູຢາງຂໍ້ວ (Asphalt), ວຽກລະບົບລະບາຍນ້ຳ, ການຕິດຕັ້ງອຸປະກອນຄວາມປອດໄພທີ່ທ້ອງຖະໜົນ ແລະ ວຽກບຳລຸງຮັກສາທາງເກົ່າ,ສ້ອມແປງຂຸມ ເພື່ອອຳນວຍຄວາມສະດວກໃນການສັນຈອນຂອງປະຊາຊົນໃນໄລຍະການກໍ່ສ້າງ.

——-

ກະຊວງ ຍທຂ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 13:12 ໂມງ · ອ່ານ 5 ຄັ້ງ

ເກີດເຫດລົດກະບะເສຍຫຼັກຕົກແຄມທາງ ຢູ່ທາງຂຶ້ນສະໜາມບິນເກົ່າ ບ້ານອຸດົມ ເມືອງຫ້ວຍຊາຍ ມີຜູ້ໄດ້ຮັບບาดเจັบ 2 ຄົນ.



ໃນເວລາປะมาน 6:30 นาทีของวันที่ 18 ตุลา 2026 ได้เกิดอุปะติเหตลิดกะบะ เสยหฺักตกแถม ทางเบื้องซ้าย ยู่เขดทางขึ้นสะหฺนามบินเก่า บ้านอุดม เมืองห้อยซาย แขวงบ่แก้ว.

ตามข้มูนเบื้องต้นให้ธู้อ่า: ลิดถันดั่งก่าอแม่น ได้แล่นลิงเนินถ้อยทางขึ้นสะหฺนามบินเก่า แล้วเกิด เสยหฺักตกลิงแถมทาง. เหดการดั่งก่าอได้สิ่งผินให้ ผู้ที่ยู่พายในลิด จำนอน 2 คืน ได้ธับบาดเจับ สิมถอน.

พายหลังเกิดเหด, เจ้าหน้าที่จาละจอนได้ลิงธอด กวดกาสะถานที่เกิดเหด เพื่อเกับกำข้มูน, หฺักฐาน.

ส่วนลายละอยดว่าเจ้าของลิดแม่นใผ และ สาเหดที่แท้จิงของการเกิดอุปะติเหดในถั่งนี้ แม่น ยู่ในขั้นตอนเจ้าหน้าที่กำลังเกับกำข้มูน.

ข่าว: ข่าวแขวงบ่แก้ว

เสดถะกิด-สังคม

เสดถะกิด-สังคม · 11:40 ໂມງ · ອ่ານ 7 ຄັ້ງ

ส่งออกกว่า 7,111 โตน! สินค้ากะสิกำลาอผ่านด่านแถบสะหวัน ไปหวຽดนาม ส้างมูนค่ากะลุ 12 ล้านโดลา (เถือนกันยา 2026)



ກะຊวงกะสิกำ ແລะ สิ่งแวดล้อม ลายงาน ວันที่ 15 ตุลา 2026 อ่า: พะแนกสะถิติกะสิกำ ແລะ สิ่งแวดล้อม, กົมแผนการ ແລะ การร่วมมือ ได้ลายงาน ก่ยวกับสะพาบ การส่งออก สินค้ากะสิ กำ ยู่ด่านสากົน แถบสะหวัน แต่วันที่ 01- 31 กันยา 2026 อ่า: บันดาลายการสินค้ากะสิกำที่สำ คัน พืด, ผะลิดตะพันพืด ແລะ ผะลิดตะพันไม้ จำ นอน 7,111.24 โตน ແລะ ลวมเป้นมูนค่าทั้งพืด 12,730,053.43 โดลาสะหะลัด, เซิ่งในนั้น, มี ลายการสินค้ากะสิกำที่ส่งออกเป้นส่วนหลายมี: แป้งมันต็ม, เฮ้าสานพงอ, แป้งข้ยางพาลา, ยางพาลา สำเล็ดธุบ, ยางพาลาเถิ่งสำเล็ดธุบ, ยางพาลาดิบ, ใบ ยาสูบแห้ง, สินค้าดั่งก่าอ ส่วนหลาย แม่นได้ส่งออก ไปยัง สส หวຽดนาม ลายละอยดมิดั่งนี้:

1. เฮ้าสานพงอ ส่งออก ไปปะเทด สส หวຽดนาม จำนอน 80 โตน เป้นมูนค่า 33,600 ลา สะหะลัด.

2. แป้งมันต็ม ส่งออก ไปปะเทด สส หวຽดนาม จำนอน 1,129 โตน เป้นมูนค่า 552,405 ลา สะหะลัด.

3. ใบยาสูบแห้ง ส่งออก ไปปะเทด สส หวຽดนาม จำนอน 13.84 โตน เป้นมูนค่า 258,000 ลา สะหะลัด.

4. ยางพาลาสำเล็ดธุบ ส่งออก ไปปะเทด สส หวຽดนาม จำนอน 1,419.6 โตน เป้นมูนค่า 3,093,327.3 โตน เป้นมูนค่า โดลา สะหะลัด.

5. ข้ยางพาลา ส่งออก ไปปะเทด สส หวຽดนาม จำนอน 145 โตน เป้นมูนค่า 77,500 โดลา สะหะลัด.

6. ยางพาลาเถ็องสำเล็ดธุบ ส่งออก ไปปะเทด สส หวຽดนาม จำนอน 3,628.80 โตน เป้นมูนค่า เป้นมูนค่า 7,799,744 โดลาสะหะลัด.

7. ยางพาลาดิบ ส่งออก ไปปะเทด สส หวຽดนาม จำนอน 695 โตน เป้นมูนค่า 915,477.13 โดลา สะหะลัด

ຮับ ມะหาสาน ลายวัน ทางอิเมอ ฟรี

ໜังสือพิมสะบับใหม่ ส่งเถิงอิเมอท่าน ทุกเช้า ก่อนเฮ้าวຽก. สะแกน QR หื เฮ้า mahaxan.com/newspaper

◆ ເຫດການ · 10:45 ໂມງ · ອ່ານ 23 ຄັ້ງ

ແຂວງຊຽງຂວາງ ພົບການລັກລອບຂຸດຄົ້ນແຮ່ຄຳ ຢູ່ຫ້ວຍນ້ຳພານ ເມືອງຄູນ ກັກຕົວໄດ້ 3 ຄົນ



ວັນທີ 10 ຕຸລາ 2026 ໜ່ວຍງານຄະນະສະເພາະກິດ ກອງບັນຊາການທະຫານແຂວງຊຽງຂວາງ, ໄດ້ຮັບແຈ້ງຈາກພົນລະເມືອງດີວ່າ: ຢູ່ຫ້ວຍນ້ຳພານ, ບ້ານຄັງໂຮງ, ເມືອງຄູນ, ແຂວງຊຽງຂວາງ ມີການລັກລອບດຳເນີນການຂຸດຄົ້ນແຮ່ຄຳ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ຖືກຕ້ອງຕາມລະບຽບກົດໝາຍ. ສະນັ້ນ, ຈຶ່ງໄດ້ນຳໜ່ວຍງານຄະນະສະເພາະກິດລົງກວດການພື້ນທີ່ຕົວຈິງ.

ຜ່ານການລົງກວດກາຕົວຈິງຢູ່ໃນສະໜາມຂອງໜ່ວຍງານຄະນະສະເພາະກິດ ພົບເຫັນການລັກລອບດຳເນີນການຂຸດຄົ້ນແຮ່ຄຳໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ຖືກຕ້ອງຕາມລະບຽບກົດໝາຍ ສາມາດກັກຕົວຜູ້ລັກລອບໄດ້ 3 ຄົນ ຄື:

1. ນາງ ແກ້ວ ມະນີ ຢູ່ບ້ານດ່ານຊ້າງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ (ເປັນເຈົ້າຂອງ).

2. ທ້າວ ວົງ ພອນວິໄລ ຢູ່ບ້ານໜອງພະຍາ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ (ເປັນເຈົ້າຂອງ).

3. ທ້າວ ຫລ້າ ຢູ່ບ້ານ ໂພນສະອາດ, ເມືອງແປກ, ແຂວງຊຽງຂວາງ (ເປັນຜູ້ຊ່ວຍວຽກໃນພາກສະ ໜາມ).

ສາມາດກວດຢຶດອຸປະກອນ ແລະ ເຄື່ອງມືທີ່ໃຊ້ເຂົ້າໃນການຂຸດຄົ້ນແຮ່ທາດ ຄື: ລົດຈີກ 6 ຄັນ, ເຄື່ອງດູດນ້ຳ 5 ເຄື່ອງ, ຕະແກງຮ່ອນຄຳ 3 ເຄື່ອງ, ລົດຈັກ 1 ຄັນ, ເຄື່ອງປັ່ນໄຟ 1 ເຄື່ອງ ແລະ ເຄື່ອງມືອື່ນໆ ທີ່ນຳໃຊ້ເຂົ້າໃນການລັກລອບຂຸດຄົ້ນແຮ່ທາດ.

ຕໍ່ກັບເຫດການດັ່ງກ່າວ, ໜ່ວຍງານຄະນະສະເພາະກິດ, ກອງບັນຊາການທະຫານແຂວງຊຽງຂວາງ ໄດ້ຢຸດຕິທຸກກິດຈະກຳການຂຸດຄົ້ນໃນທັນທີ, ພ້ອມທັງເຮັດບົດບັນທຶກກວດຢຶດສັບສິນເປັນຂອງກາງ ແລະ ເປັນຫລັກຖານນຳສົ່ງໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ດຳເນີນຄະດີຕາມລະບຽບກົດໝາຍຢ່າງເຂັ້ມງວດ.

◆ ເຫດການ · 10:23 ໂມງ · ອ່ານ 1 ຄັ້ງ

ລົດບັນທຸກຂົນແທ່ງປູນເກີນຂະໜາດ ຢູ່ເສັ້ນທາງໃນເມືອງທ່າແຂກ ແຂວງຄຳມ່ວນ



ລົດບັນທຸກຂົນແທ່ງປູນເກີນຂະໜາດ ຢູ່ເສັ້ນທາງໃນເມືອງທ່າແຂກ ແຂວງຄຳມ່ວນ ເຮັດໃຫ້ສ່ຽງເກີດອັນຕະລາຍຕໍ່ຜູ້ຂັບຂີ່ຕາມທ້ອງຖະໜົນ ເນື່ອງຈາກລົດດັ່ງກ່າວບໍ່ໄດ້ມີການປ້ອງກັນ ຫຼື ມິດງບຕະການຄວາມປອດໄພ ຝາກເຖິງເຈົ້າໜ້າທີ່ຄວນນຳມາສຶກສາອົບຮົມ ແລະ ປັບໃໝ ໃສ່ໂທດ ຢ່າງເຂັ້ມງວດ.

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ท่องท่ารุอ · 13:38 ไมง · อ่าน 12 ถั้ง

ขໍสะแดงถอามยินดีกับ พอมอะนิดา เมืองหาน ต๊อแทนแขอวสะหวันนะเขด ที่ได้รับตำแหน่ง นางสาวท่องท่ารุอลาว ปะจำปี 2026



เวทีการปะกวด Miss Tourism Laos 2026 (นางสาวท่องท่ารุอลาว 2026) ที่ได้ปะกาดผินย่างเป็นทางกาน.

ผู้ที่สามาดเอาชะนะใจถะนะกำมะกาน และสางถอามปะทับใจใต้กับแฟนๆท๊อปะเทด จินสามาด ถอ้ามุงกุด Miss Tourism Laos 2026 ไปถอบถองสำเล็ด ได้แก่ นาง พอมอะนิดา เมืองหาน สาวงามต๊อแทนจาก แขวงสะหวันนะเขด.

ใบนี้ ยังมีธอง

ที่มา: Miss Tourism Laos

ข่าวต่างปะเทด

ข่าวต่างปะเทด · 11:20 ไมง · อ่าน 6 ถั้ง

เหตสะหลูดใจ! ชายอายุ 71 ปี จากลัดฟลໍธิดา ถูกอาลิเกเตียาว 3.6 แม็ด โจมตี ແละลากลົงน้ำจົนเสยชีวิด ขะนะที่กำลังยืนตึกเบัดอยู่แถมทะเลสาบ.



ชายอายุ 71 ปี เสยชีวิดหลังถูกแข้อาลิเกเติ (Alligator) ขะหฒาดใหย่ ถอามยาวเกือบ 3.6 แม็ด โจมติและลากลົงน้ำ ขะนะที่ลาวกำลังยืนตึกเบัดอยู่แถมทะเลสาบอาปอบกา (Lake Apopka) ในลัดฟลໍธิดา สะหะลัดอาเมลิกา.เหตการนี้ถูเป็นกໍละนิที 2 ของลัดฟลໍธิดาในปีนี้ ที่มีผู้เสยชีวิดจากการถูกแข้อาลิเกเติโจมติ. เจ้าໜ้าที่ได้จับและข้าแข้ที่กໍ่เหตแล้อ พ้อมทังเตือนปะชาชินใช้เพิ่มถอามละมัดละวัง. เหตสะหลูดเกิดขึ้นขะนะยืนตึกเบัดเจ้าໜ้าที่ลัดฟลໍธิดาเปิดเผยอ่า ท้าว สติเอ้น แธมิลตัน (Steven Hamilton) อายุ 71 ปี จากเมืองอ็นเติกาเด้น เสยชีวิดหลังถูกแข้อาลิเกเติโจมติ ขะนะที่กำลังตึกปาอยู่แถมแหงน้ำพายในสอมสาทาละนะ ดธ. แบธด ฟอด เมโมธงอ (Dr. Bradford Memorial Park) ในเวลาปะมาน 17:00 ไมง ของวันที 16 ตุลา ตามเวลาท้องถิ่น.สอนสาทาละนะแห่งนี้ตั้งอยู่แถมทะเลสาบอาปอบกา ห่างจากเมืองอໍแลนโด (Orlando) ไปทางตาเอ้นติกสงเหนือปะมาน 24 กิโลแม็ด.

เจ้าໜ้าที่ถะนะกำมะกานอะนุลักปา และ สัดป่าลัดฟลໍธิดาละบุอ่า แธมิลตันได้ธับบาดเจ็บสาทัด และ เสยชีวิดในจุดเกิดเหต. ลายงานละบุอ่า อาลิเกเติโตถ้างก่าอมิถอามยาว 11 ฟุด 8 นิ้อ หืปะมาน 3.56 แม็ด และได้ลากซ่างของแธมิลตันลิงไปในน้ำ.เจ้าໜ้าที่ถับเพิงต้องใช้เอลาปะมาน 2 ซั่วโมง จึงสามาดนำซ่างของลาวขึ้นมาจากน้ำได้ เนื่องจากยังมีแข้อาลิเกเติโตอื่นๆอยู่ในบໍลิเอนนั้น เธ็ดใท้การช่อยเหลือเป็นไปย่างหยุ้งยาก.

เจ้าໜ้าที่จับ และ ข้าอาลิเกเติที่กໍ่เหตตำหูอดละบุอ่า เจ้าໜ้าที่จับสัดได้เข้าดำเนินการจับอาลิเกเติที่กໍ่เหตขึ้นมา และ ข้ามันแล้อ. เจ้าໜ้าที่คาดอ่า อาลิเกเติโตนี้อาดมาจากทะเลสาบอาปอบกาที่อยู่ใก้ถง. ท่าน ไมเถิล เมสัน (Michael Mason) นายตำหูอดอั้นกับตันของสะถานิตำหูอดอิมเติกาเด้น ท่าอ่า ทะเลสาบแห่งนี้มีแข้อาลิเกเติอาไสอยู่จำนอนหูาย ดั่งนั้น การพบเห็นสัดจะนิดนี้ในบໍลิเอนดั่งก่าจึงบໍ่แม่นเลื่องแปก.เมสันเตือนปะชาชินใท้สังเกดสะพาบแอดล้อมธอบติอเถ้าลิบสัดป่า และธักสาไลยะห่างย่างเหมาะสม.

เถิงแม่นอ่า อาลิเกเติจะเบิ่งถือว่าคุ้นเถียกับมะนุด แต่มันกໍสามาดเป็นอันตะลายเถิงชีวิดได้. เหตผู้เสยชีวิดอีกลายในลัดฟลໍธิดาเหตการนี้เป็นการโจมติที่มีผู้เสยชีวิดจากแข้อาลิเกเติในลัดฟลໍธิดาเป็นลายที 2 นับตั้งแต่อันที 28 มิถุนาที่ผ่านมา. ก่อนหน้านี้ นาง บริดทานี คลาก (Brittany Clark) อายุ 31 ปี จากเมืองอໍแลนโด เสยชีวิดจากการถูกแข้อาลิเกเติโจมติอยู่บໍลิเอนแม่น้ำอิถอนลักอกธาดชี (Econlockhatchee River) ใกัเมืองโอวิโด ทางตาเอ้นออกสงเหนือของอໍแลนโด.ลายงานละบุอ่า ในเวลาเกิดเหต คลากกำลังฤเข้าอยู่ในน้ำที่มีถอามเลิกปะมาน 90 ซังตีแม็ด. แฟนหนุ่มของนางสามาดช่อยดึงนางออกจากปากของแข้ได้ แต่นางได้ธับบาดเจ็บธุนแธง โดยแขนข้างหนึ่งถูกกัดขาด ส่อนแขนอีกข้างกໍได้ธับบาดเจ็บสาทัด. ต่มานางได้เสยชีวิดละหว่างการนำส่งโธงหม.หลังเหตการ เจ้าໜ้าที่ได้จับ และ ข้าอาลิเกเติที่มีถอามยาวปะมาน 4 แม็ด อู่จุดเกิดเหต และยังจับแข้อีกโตหนึ่งที่มีถอามยาวปะมาน 3.8 แม็ด ได้ในจุดที่ห่างออกไปปะมาน 800 แม็ด.

สะถิติการโจมติของโตอาลิเกเติในลัดฟลໍธิดาข้มูนจากถะนะกำมะการอะนุลักปาและสัดป่าลัดฟลໍธิดาละบุอ่า ในปี 2025 ลัดฟลໍธิดามี

ต่ๅหน้า 12

เหตสะห฼ึดใจ! ชายอายุ 71 ปี จากลัดฟลัธิดา ถืกอาลีเภเ... (ต้จากหน้า 11)

ເຫດແຂ້ອາລີເກເຕີໂຈມຕີມະນຸດ 13 ຄັ້ງ ໃນນັ້ນເປັນການໂຈມຕີຮຸນແຮງ 8 ຄັ້ງ ແລະບໍ່ຮຸນແຮງ 5 ຄັ້ງ ໂດຍມີຜູ້ເສຍຊີວິດ 2 ຄົນ.ໂດຍທົ່ວໄປ ລັດຟລໍຣິດາມີລາຍງານເຫດແຂ້ອາລີເກເຕີໂຈມຕີມະນຸດປະມານ 12 ຄັ້ງຕໍ່ປີ. ແຕ່ໃນປີ 2023 ມີລາຍງານການໂຈມຕີເຖິງ 23 ຄັ້ງ ແລະມີຜູ້ເສຍຊີວິດ 2 ຄົນ.ເຖິງແມ່ນວ່າລັດຟລໍຣິດາຈະມີແຂ້ອາລີເກເຕີຫຼາຍກວ່າ 1 ລ້ານໂຕ ແຕ່ເຫດການໂຈມຕີມະນຸດກໍຍັງຖືວ່າເກີດຂຶ້ນບໍ່ບ່ອຍ. ຕາມຂໍ້ມູນຂອງໜ່ວຍງານສັດປ່າປະຈຳລັດ ນັບຕັ້ງແຕ່ປີ 1948 ມີຜູ້ເສຍຊີວິດຈາກການຖືກແຂ້ອາລີເກເຕີໂຈມຕີໃນລັດຟລໍຣິດາລວມ 34 ຄົນ ລວມທັງເຫດການລ່າສຸດໃນປີນີ້.

ที่มา: The Associated Press

ข่าวต่างประเทศ · 10:47 โมง · อ่าน 6 ถั้ง

ยี่ปุ่นก฽มสั่งยานอะอะกาดบ่มิถืนฃับ ไปสำฬวดดวงจันฃองดาวอังคานในอาทิดนี้ เพื่อเกับต๊อย่างกับถืนสู่โลก



(ภาบจาก AFP PHOTO / NASA / JPL-CALTECH / UNIVERSITY OF ARIZONA)

ยี่ปุ่นก฽มสั่งยานอะอะกาดบ่มิถืนฃับ ไปสำฬวดดวงจันฃองดาวอังคานในอาทิดนี้ เพื่อเกับต๊อย่างกับถืนสู่โลก เพื่อไขข้สิงไสต่างๆก่฽วกับอะอะกาด ลวมทังกานกำเนิดฃองดวงจันบ๋อิวาน ฃองดาวเถาะสีแดงดวงนี้.

อิงกานสำฬวดอะอะกาดยี่ปุ่น (JAXA) ก฽มสั่งยานอะอะกาดบ่มิถืนฃับ MMX (Martian Moons eXploration) เพื่อเดินทางไปสำฬวดดวงจันฃองดาวอังคาน ละเกับต๊อย่างจากพื้นผิวกับมายังโลก. นี้ถืเป็นพาละกิดเดินทางไป-กับจากละบิบดาวอังคานถังท้ายิดฃองโลก.

ยาน MMX จะถืกสั่งขึ้นสู่อะอะกาดด้วยจะฬวด H3 เช่ิงเป็นจะฬวดรุ่นทีกฃองยี่ปุ่น จากสูนอะอะกาดทาเนะงะซิมะ ในเวลา 04:41 โมง ฃองวันอังคานที่ 20 ตุลา 2026 ตามเวลาท้องถิ่น.

ตามแผนกาน ยานอะอะกาดจะเดินทางไปธวดบ๋อิเวนใก้ดาวอังคานในช่วงเดือนสิงหาปีหน้า ละจะเข้ำสู่อิงโถจวนฃอง โฟบอส (Phobos) เช่ิงเป็นหนึ่งในดวงจันฃองดาวอังคาน. หลังจากนั้น ยานจะลิงจอดเพื่อเกับต๊อย่างจากพื้นผิว โดยมิเป้ำหมายเกับต๊อย่างย่างห๊อย 10 กะถาม ตะฬวดพาละกิดที่มิไลยะเวลา 3 ปี.

ก่อนที่ยานหุ้กจะลิงจอด จะมิกานสั่งหุ่นยินสำฬวดพื้นผิวชื่ IDEFIX เช่ิงตั้งชื่ตามสุนักฃอง ต๊อละถอนกาตุนฝรั่งชื่ดัง Asterix ลิงไปสำฬวดพื้นผิวก่อน เพื่อช่วยปะเมินถวามปอดไพสำลับกานลิงจอด.

นอกจากนี้ ยาน MMX ยังจะสำฬวด ดิมอส (Deimos) เช่ิงเป็นดวงจันอีกดวงหนึ่งฃองดาวอังคาน แต่จะบ่ลิงจอดเหิงดวงจันดวงนี้ ก่อนจะเดินทางกับถืนสู่โลก.

JAXA หวังว่าต๊อย่างที่เกับมาจากโฟบอส จะช่วยไขข้สิงไสว่าดวงจันฃองดาวอังคานเกิดขึ้นจากกานชินละหฬาดใหย่ ละหว่างอัดถุในอะอะกาดกับดาวอังคาน หฺือเกิดจากกานที่ดาวอังคานใช้แธงโน้มถ่วงดึงดูดอัดถุในอะอะกาดเข้ำมา จินกายเป็นดวงจันบ๋อิวาน.

นักอิทะยาสาดละบุว่า ต๊อย่างเห้านี้อาดช่วยเปิดเผิยกับไกกานถ่าย โอนน้ำ สานที่ละเหิยง่าย และสานปะกอบอินชิ จากพื้นที่นอกละบิบสุลิยะเข้ำมาสู่ดาวเถาะหินชั้นใน. ถวามเข้ำใจในกะบวนกานนี้ถืเป็นกะแจสำคับ ในกานช่วยอะทิบายว่าเป็นหยังโลกและดาวเถาะอื่นๆ จึ่งมีสะพาบแวดล้อมที่เหมาะสิมต่ำกานมีสิ่งมิชีวิด.

พาละกิดนี้ยังช่วยสำฬวดถวามเป็นไปได้ในกานใช้ดวงจัน โฟบอส (Phobos) เป็น “สะถานิอะอะกาดทำมะชาด” เช่ิงมิถวามสำคับย่างยิ่งต่ำกานสิ่งมะนุดไปสำฬวดดาวอังคานในอะนาถิด.

อะนึ่ง พาละกิด MMX เป็นถวามร่วมมือระหว่าง JAXA กับอิงกานอะอะกาดฃองฝรั่ง (CNES), เยยละมัน (DLR), สะหะลัดอาเมลิกา (NASA), อิงกานอะอะกาดเอิธิบ (ESA) ลวมทังมะหาอิทะยาไล ละบ๋อิสัดเต้กโนโลชิอิกประมาน 20 แห่ง.

ทังนี้ ยี่ปุ่นเถียประสิบผิมสำเล็ดในกานม้าต๊อย่างฝุ่น ละหินจากดาวเถาะน้อยกับถืนสู่โลกมาแล้อ ผ่านโถงกาน Hayabusa-2 ในปี 2020.

ลาถาน้ำมัน, เงิน, ถำ, หวย และ อากาด — สืดทุกมื้
เบิ่งถือเลกล่าสุด ที่ mahaxan.com/today · หน้า 15 ในสะบับนี้

◆ ເບິ່ງດວງ · 10:36 ໂມງ · ອ່ານ 18 ຄັ້ງ

ເບິ່ງດວງປະຈຳວັນທີ 19/10/2026.



ຄົນເກີດວັນອາທິດ

ການງານ: ມີເກນຂັດແຍ່ງກັບໝູ່ຮ່ວມງານ ເນື່ອງຈາກມີຄວາມຄິດເຫັນບໍ່ກົງກັນ.

ການເງິນ: ບໍ່ມີເງິນເຫຼືອເກັບ ເພາະມີແຕ່ລາຍຈ່າຍ. ຄວນເຮັດບຸນຖວາຍສັງຄະທານ ເພື່ອແກ້ເຄັດຕາມຄວາມເຊື່ອ.

ຄົນເກີດວັນຈັນ

ການງານ: ຄົນຮອບຂ້າງຕ່າງກໍຄາດຫວັງໃນຕົວທ່ານໄວ້ສູງ ຈຶ່ງເຮັດໃຫ້ທ່ານຕ້ອງເຮັດວຽກພາຍໃຕ້ຄວາມກົດດັນ.

ການເງິນ: ເຖິງແມ່ນວ່າສະພາບການເງິນຈະດຳເນີນໄປໄດ້ດີ ແລະຮາບລື່ນ ແຕ່ກໍບໍ່ຄວນປະໝາດເດັດຂາດ!

ຄົນເກີດວັນອັງຄານ

ການງານ: ມີເກນຕ້ອງເມື່ອຍລ້າກັບການເຮັດວຽກ ແຕ່ຜົນຕອບແທນທີ່ໄດ້ຮັບນັ້ນຄຸ້ມຄ່າຫຼາຍ.

ການເງິນ: ເສຍເງິນໄປກັບການຊື້ສິ່ງຂອງທີ່ທ່ານປາຖະໜາ ຫຼືຢາກໄດ້ມາດົນແລ້ວ.

ຄົນເກີດວັນພຸດ

ການງານ: ເຮັດດີໄດ້ ແຕ່ຢ່າດັ່ນຈົນເກີນໄປ ບໍ່ດັ່ງນັ້ນ ອາດເຮັດໃຫ້ຄົນຮອບຂ້າງອິດສາ ແລະຄິດຫາທາງກັ່ນແກ້ງ ຫຼື ຂັດຂວາງຄວາມກ້າວໜ້າຂອງທ່ານ.

ການເງິນ: ມີເກນໄດ້ຮັບຄ່າຕອບແທນຈາກການເຮັດວຽກຫຼາຍເປັນພິເສດ.

ຄົນເກີດວັນພະຫັດ

ການງານ: ໂອກາດທອງຂອງທ່ານມາຮອດແລ້ວ! ຖ້າຈະສະເໜີວຽກ ຫຼື ຕິດຕໍ່ປະສານງານເລື່ອງໃດ ກໍມີເກນຈະປະສົບຜົນສຳເລັດ ໄດ້ດັ່ງໃຈປາຖະໜາທຸກປະການ.

ການເງິນ: ຕ້ອງຍອມເມື່ອຍ ແລະ ອົດທົນກັບການເຮັດວຽກ ແຕ່ຈະໄດ້ຮັບຜົນຕອບແທນທີ່ຄຸ້ມຄ່າ.

ຄົນເກີດວັນສຸກ

ການງານ: ຫຼັງຈາກທີ່ທ່ານຕ້ອງພົບພໍ້ກັບອຸປະສັກຫຼາຍຢ່າງ ກໍເຮັດໃຫ້ທ່ານເລີ່ມມີທັກສະ ແລະຄວາມຊຳນານໃນການເຮັດວຽກຫຼາຍຂຶ້ນ.

ການເງິນ: ມີລາຍຮັບເຂົ້າມາຫຼາຍ ແຕ່ກໍມີລາຍຈ່າຍຫຼາຍເຊັ່ນກັນ.

ຄົນເກີດວັນເສົາ

ການງານ: ຄວາມພາກພຽນ ແລະ ຄວາມອົດທົນ ຈະນຳພາທ່ານໄປສູ່ຄວາມສຳເລັດຕາມທີ່ປາຖະໜາໄວ້.

ການເງິນ: ສະພາບການເງິນຮາບລື່ນດີ ບໍ່ມີບັນຫາຫຍັງ. ແຕ່ທາງທີ່ດີ ໃນຊ່ວງນີ້ຄວນຫຼີກລ່ຽງການລົງທຶນ ຫຼື ການສ່ຽງໂຊກໄປກ່ອນ.

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ໂຄສະນາ

EMERGING DIGITAL SOLUTIONS

ແນວຄິດ → ອອກແບບ → ເປີດໃຊ້ງານ

ຮັບອອກແບບ ແລະ ພັດທະນາ ເວັບໄຊທ໌ · ແອັບ · ລະບົບທຸລະກິດ

ທ່ານມີແນວຄິດ?
ພວກເຮົາຊ່ວຍສ້າງໃຫ້ເປັນຈິງ

ບໍ່ວ່າທ່ານຢາກເຮັດລະບົບຫຍັງ , ພວກເຮົາຊ່ວຍໃຫ້ຄຳປຶກສາ ແລະ ສ້າງໃຫ້ເປັນຈິງໄດ້



ຢາກມີລະບົບ ເປັນຂອງຕົວເອງບໍ? ເຮົາສ້າງໃຫ້

ສິ່ງທີ່ພວກເຮົາສ້າງໃຫ້ທ່ານ

- ເວັບໄຊທ໌ທຸລະກິດ
- ເວັບແອັບ
- ແອັບມືຖື
- ຮ້ານຄ້າອອນລາຍ
- ລະບົບ CRM
- ລະບົບ ERP
- ປລັກອິນ & API
- ໂຊລູຊັນ AI

ຕິດຕໍ່ໄດ້ເລີຍ, ໃຫ້ຄຳປຶກສາຟຣີ

020 58886182

← ສະແກນ QR ເພື່ອແຊັດ WhatsApp · eds.la

ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ

ວັນອັງຄານ 20 ຕຸລາ 2026 · ສະບັບທີ 002

ສະໜັບສະໜຸນໂດຍ [ແບຣນຂອງທ່ານ] · ພື້ນທີ່ນີ້ວ່າງ — ໜ້າຂໍ້ມູນທີ່ຄົນເປີດເບິ່ງທຸກມື້ WhatsApp 020 5888 6182

ລາຄານ້ຳມັນ 18 ແຂວງ

ກີບ/ລິດ · ມີຜົນ 22/10/2026

ແຂວງ	ແອັດຊັ່ງ 95	ທຳມະດາ 91	ກາຊວນ
ນະຄອນຫຼວງວຽງຈັນ	**▼ 40,230**	**▼ 34,490**	**▼ 34,040**
ແຂວງວຽງຈັນ	▼ 40,230	▼ 34,490	▼ 34,040
ຜົ້ງສາລີ	▼ 41,220	▼ 35,480	▼ 35,030
ຫຼວງນ້ຳທາ	▼ 40,720	▼ 34,990	▼ 34,530
ອຸດົມໄຊ	▼ 40,900	▼ 35,160	▼ 34,710
ບໍ່ແກ້ວ	▼ 40,330	▼ 34,590	▼ 34,140
ຫຼວງພະບາງ	▼ 40,740	▼ 35,000	▼ 34,550
ຫົວພັນ	▼ 40,740	▼ 35,000	▼ 34,550
ໄຊຍະບຸລີ	▼ 40,550	▼ 34,820	▼ 34,370
ຊຽງຂວາງ	▼ 40,430	▼ 34,680	▼ 34,230
ໄຊສົມບຸນ	▼ 40,650	▼ 34,910	▼ 34,470
ບໍລິຄຳໄຊ	▼ 40,280	34,540	▼ 34,090
ຄຳມ່ວນ	▼ 40,260	▼ 34,520	–
ສະຫວັນນະເຂດ	▼ 40,260	▼ 34,520	▼ 34,070
ສາລະວັນ	▼ 40,510	▼ 34,780	▼ 34,330
ເຊກອງ	▼ 40,510	▼ 34,770	▼ 34,330
ຈຳປາສັກ	▼ 40,290	▼ 34,550	▼ 34,100
ອັດຕະປື	▼ 40,560	▼ 34,820	▼ 34,370

ແຫຼ່ງ: ລາຍງານລາຄາ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ · mahaxan.com/today/fuel · ▲ ຂຶ້ນ ▼ ລົງ ທຽບກັບລາຄາກ່ອນ (17/09)

ປະຕິທິນ

ວັນສຳຄັນ ທີ່ໃກ້ມາເຖິງ

26/10		ວັນພຣະ · ວັນບຸນອອກພັນສາ
27/10		ວັນບຸນຊ່ວງເຮືອ ນະຄອນຫຼວງວຽງຈັນ
03/11		ວັນພຣະ
09/11		ວັນພຣະ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ອັດຕາແລກປ່ຽນ

ກີບ · BCEL 23/10/2026

ສະກຸນເງິນ	ຊື້ (ເງິນສົດ)	ຂາຍ
USD ໂດລາ ສະຫະລັດ	▲ 22,277	▲ 22,623
THB ບາດ ໄທ	▼ 669.57	▼ 682.50
CNY ຢວນ ຈີນ	▲ 3,327	▲ 3,392
EUR ເອີໂຣ	▲ 25,011	▲ 25,511
VND ດົ່ງ ຫວຽດນາມ	0.86	0.87
JPY ເຢັນ ຍີ່ປຸ່ນ	▲ 141.88	▲ 144.56
SGD ໂດລາ ສິງກະໂປ	▲ 17,081	▲ 17,762
GBP ປອນ ອັງກິດ	▲ 29,780	▲ 30,372

ສະເລ່ຍທະນາຄານ (ທຫລ): USD ຊື້ 22,398 · ຂາຍ 22,621 · ▲ ຂຶ້ນ ▼ ລົງ ທຽບກັບມື້ກ່ອນ

ລາຄາຄຳ

ກີບ · ຂາຍ

ຄຳຮູບປະພັນ 1 ບາດ

44,750,000

▼ 60,000

ຄຳແທ່ງ 99.99% · 1 ກຣາມ

2,981,600

▼ 40,000

ອັບເດດ 25/10 17:00 · mahaxan.com/today/gold

ຫວຍພັດທະນາ

ງວດ 181

ອອກວັນທີ 23/10/2026

740111

ງວດ 180 · 22/10	278077
ງວດ 179 · 21/10	435208
ງວດ 178 · 20/10	697767
ງວດ 177 · 19/10	046331

ພະຍາກອນອາກາດ

ວັນອັງຄານ 20 ຕຸລາ 2026

ເມືອງ	ຕ່ຳ–ສູງ	ສະພາບ
ວຽງຈັນ	23.5–30.9°C	ເມກບາງສ່ວນ
ຫຼວງພະບາງ	24.4–29.7°C	ເມກບາງສ່ວນ
ໂພນສະຫວັນ	19.4–27.5°C	ມີຝົນ
ຊຳເໜືອ	19.8–26.6°C	ມີຝົນ
ສະຫວັນນະເຂດ	23.3–32.3°C	ມີຝົນ
ປາກເຊ	24.2–30.7°C	ແຈ່ມໃສ

ແຫຼ່ງ: MET Norway · ຂໍ້ມູນສົດ: mahaxan.com/today

ຕົວເລກປ່ຽນທຸກມື້ — ເບິ່ງສົດ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ ອັບເດດສົດ ທີ່ mahaxan.com/today

ກິລາ · 14:08 ໂມງ · ອ່ານ 8 ຄັ້ງ

ກິດຈະກຳແລກປ່ຽນວັດທະນະທຳ ແລະ ກິລາປະຈຳປີ 2026 ຂອງການເຄື່ອນໄຫວລາດຕະເວນບັງຄັບໃຊ້ກົດໝາຍຮ່ວມຕາມລຳແມ່ນ້ຳຂອງ ຈີນ-ລາວ-ມຽນມາ-ໄທ



ວິທະຍຸໂທລະພາບສູນກາງຈີນ CMG ໄດ້ລາຍງານວ່າ: ວັນທີ 18 ຕຸລາ 2026, ກິດຈະກຳແລກປ່ຽນວັດທະນະທຳ ແລະ ກິລາ ປະຈຳປີ 2026 ຂອງການເຄື່ອນໄຫວລາດຕະເວນບັງຄັບໃຊ້ກົດໝາຍຮ່ວມຕາມລຳແມ່ນ້ຳຂອງ ຈີນ-ລາວ-ມຽນມາ-ໄທ ໄດ້ຈັດຂຶ້ນຢູ່ນະຄອນຊຽງຮຸ່ງ ກົ່ງແຂວງປົກຄອງຕົນເອງເຜົ່າລື້ສິບສອງພັນນາ ແຂວງຢຸນນານ ຈີນ. ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ 300 ກວ່າທ່ານຈາກ 4 ປະເທດ ຄື: ຈີນ, ລາວ, ມຽນມາ ແລະ ໄທ ໄດ້ເຕົ້າໂຮມກັນຢູ່ສຳນັກງານກອງລາດຕະເວນທາງນ້ຳຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງຢຸນນານ ເພື່ອແຂ່ງຂັນກິລາ ແລະ ແລກປ່ຽນໄມຕີຈິດມິດຕະພາບ ໂດຍໃຊ້ການແລກປ່ຽນວັດທະນະທຳ ແລະ ກິລາ ເປັນຂົວເພື່ອເພີ່ມທະວີການຮ່ວມມືບັງຄັບໃຊ້ກົດໝາຍລະຫວ່າງ 4 ປະເທດດັ່ງກ່າວ ແລະ ເຕົ້າໂຮມກຳລັງແຮງເພື່ອບໍລິຫານເຂດລ່ອງແມ່ນ້ຳຂອງຮ່ວມກັນ. ບັນຍາກາດຢູ່ສະຖານທີ່ຈັດກິດຈະກຳເຕັມໄປດ້ວຍຄວາມຄຶກຄື້ນມ່ວນຊື່ນ ໂດຍມີການແຂ່ງຂັນກິລາ 5 ປະເພດ ຄື: ບານເຕະ, ກະຕໍ້, ດຶງເຊືອກ, ດອກປົກໄກ່ ແລະ ການແລ່ນສິ່ງຕໍ່.

ປີນີ້ແມ່ນຄົບຮອບ 15 ປີ ຂອງກົນໄກລາດຕະເວນບັງຄັບໃຊ້ກົດໝາຍຮ່ວມຕາມລຳແມ່ນ້ຳຂອ ຈີນ-ລາວ-ມຽນມາ-ໄທ. ຕະຫລອດໄລຍະ 15 ປີ ຜ່ານມາ, ພາກສ່ວນບັງຄັບໃຊ້ກົດໝາຍຈາກ 4 ປະເທດດັ່ງກ່າວໄດ້ຮ່ວມຈິດຮ່ວມໃຈ ແລະ ຊ່ວຍຊູຢູ້ໜູນກັນ, ດຳເນີນການເຄື່ອນໄຫວລາດຕະເວນບັງຄັບໃຊ້ກົດໝາຍຢ່າງເປັນປົກກະຕິ, ປາບປາມການກະທຳທີ່ຜິດກົດໝາຍ ແລະ ອາດຊະຍາກຳຕ່າງໆຕາມລຳແມ່ນ້ຳຂອງ ເຊັ່ນ: ການຄ້າຢາເສບຕິດ, ການເຂົ້າເມືອງຜິດກົດໝາຍ, ການລັກລອບຂົນສົ່ງສິນຄ້າ, ການຫລອກລວງທາງໂທລະຄົມ ແລະ ອື່ນໆ. ການເຄື່ອນໄຫວດັ່ງກ່າວສາມາດປົກປ້ອງຄວາມປອດໄພຕາມລຳແມ່ນ້ຳຂອງ ແລະ ຮັບປະກັນຄວາມປອດໄພດ້ານຊີວິດ ແລະ ຊັບສິນຂອງປະຊາຊົນຢ່າງມີປະສິດທິຜົນ.

ໂຄສະນາ

ເຂົ້າເຖິງຜູ້ອ່ານຄົນລາວ ທຸກເຊົ້າ

ໜ້າຫຼັງ ແມ່ນໜ້າທີ່ເຫັນທຸກຄັ້ງທີ່ປິດໜັງສືພິມ. ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ.

ເບິ່ງລາຄາ: mahaxan.com/media-kit

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ມະຫາສານ ລາຍວັນ ຈັດພິມໂດຍ ມະຫາສານ (mahaxan.com) · 302/3B ຊັ້ນ 3 ອາຄານວຽງວັງ, ຖະໜົນບໍລິຈັນ, ນະຄອນຫຼວງວຽງຈັນ · info@mahaxan.com · WhatsApp +856 20 5888 6182
ຂ່າວໃນສະບັບນີ້ ເຜີຍແຜ່ໃນ mahaxan.com ວັນຈັນ 19 ຕຸລາ 2026. ສຳເນົາ PDF ນີ້ໃຫ້ໝູ່ໄດ້ຟຣີ ໂດຍບໍ່ດັດແກ້ເນື້ອໃນ.